# ປື້ມຄູ່ມື

# ນັກຮຽນອົບຮົມຄູ
# ກຳລັງຝຶກສອນ

ຈັດພິມໂດຍກົມຝຶກຫັດຄູແລະຄົ້ນຄ້ວາການສຶກສາ

# ປື້ມຄູ່ມື

ນັກຣຽນອົບຣົມຄຣູກຳລັງເຝິກສອນ

ຣຽບຣຽງໂດຍ

ບຸນໂຣມ ພິມມະວົງໄຊຍ໌

ພິມຄັ້ງທີ ໑ ຈຳນວນ ໓.໐໐໐ ເຫລັ້ມ ພ.ສ. ໒໕໑໒

# ຄຳນຳຂອງກົມເຝິກຫັດຄູ

ຂ້າພະເຈົ້າມີຄວາມເປັນຫ່ວງນຳບັນດານັກຮຽນອົບຮົມຄູທີ່ຖືກສົ່ງອອກໄປຝຶກສອນຕາມໂຮງຮຽນຕ່າງໆ ຕາມທີ່ໄດ້ປະຕິບັດມາ, ເວລາຖືກສົ່ງອອກໄປຝຶກສອນ ນັກຮຽນຄູເຄີຍໃຊ້ຫົວຄິດໃຜລາວກໍ່ເປັນການລຳບາກຢູ່ ແລະນັກຮຽນບາງຄົນກໍບໍ່ຮູ້ວ່າ ຈະເຮັດແນວໃດ ເວລາຖືກອອກໄປຝຶກສອນ ຕາມໂຮງຮຽນຕ່າງໆ ຈຶ່ງຈະໄດ້ຜົນດີ. ເພື່ອໃຫ້ມີຫລັກເກນອັນນຶ່ງ ອັນດຽວກັນ ແລະໃຫ້ໄດ້ຮັບຜົນດີ ເວລາອອກໄປຝຶກສອນຂອງນັກຮຽນຄູ, ຂ້າພະເຈົ້າຈຶ່ງໄດ້ຮັບຄວາມຮ່ວມມືຈາກອາຈານ ແລະຜູ້ອຳນວຍການ ວິທຍາລັຍຄູປາກເຊ ໃຫ້ຄົ້ນຄວ້າຫລັກຣະບຽບວິນັຍຄູທີ່ຖືກອອກໄປຝຶກສອນນີ້ອອກມາ, ເພື່ອຈະໄດ້ຈັດພິມແລະສົ່ງຫາວິທຍາລັຍຄູຕ່າງໆ ເພື່ອແຈກຢາຍໃຫ້ນັກຮຽນຄູທຸກຄົນ ທີ່ຈະຖືກສົ່ງອອກໄປຝຶກສອນ ພໍເປັນຄູ່ມືທີ່ຈະຊ່ວຍແນະແນວທາງເດີນ ທີ່ດີໃຫ້ເຂົາເຈົ້າ.

ຂ້າພະເຈົ້າຄິດວ່າ ປຶ້ມຫົວນີ້ ຈະຊ່ວຍໃຫ້ການປະຕິບັດໜ້າທີ່ຂອງນັກຮຽນຄູທີ່ຖືກສົ່ງອອກໄປຝຶກສອນ ໃຫ້ໄດ້ຜົນດີຂຶ້ນ.

ຜູ້ກວດການສຶກສາທົ່ວໄປ,

ອະທິບໍດີກົມເຝິກຫັດຄູ ແລະ ຄົ້ນຄວ້າການສຶກສາ

ຊຸນພູ ອຸດົມວິໄລ

# ຄຳນຳຂອງຜູ້ອຳນວຍການ

" ການຄົ້ນຄວ້າ ການສແວງຫາຄວາມຮູ້ຢູ່ບໍ່ໄດ້ຂາດ ເປັນຄຸນສົມບັດຂອງຜູ້ຮູ້ " ນີ້ຄືຫລັກຄວາມຈິງຂໍ້ນຶ່ງຊຶ່ງບໍ່ມີໃຜປະຕິເສດໄດ້.

ເປັນທີ່ຮູ້ກັນດີແລ້ວວ່າໃນສມັຍປັດຈຸບັນນີ້ ຕຳຣາຕ່າງໆ ແລະແບບຮຽນສຳລັບໃຊ້ໃນການຝຶກຫັດຄຣູນີ້ ຍັງຂາດເຂີນຫລາຍທີ່ສຸດ ທັງຄຣູອາຈານແລະນັກຮຽນຕ່າງກໍອາໄສ ຕຳຣາຕ່າງປະເທດຊຶ່ງຍາກແກ່ການເຂົ້າໃຈ ທັງບາງບົດກໍບໍ່ເໝາະສົມກັບສພາບ ຄວາມເປັນຈິງຂອງປະເທດເຮົາ.

ດ້ວຍເຫດດັ່ງກ່າວແລະດ້ວຍຄວາມສນັບສນູນຈາກກົມຝຶກຫັດຄຣູ ແລະຄົ້ນຄວ້າການສຶກສາ ທາງວິທຍາລັຍຄຣູປາກເຊ ຈຶ່ງໄດ້ຕົກລົງກັນຕັ້ງຄນະກັມມະການນ້ອຍໆຄນະນຶ່ງຂຶ້ນ ໂດຍການເປັນປະທານຂອງທ່ານ ບຸນໂຮມ ພົມມະວົງໄຊຍ໌ ອາຈານສອນ ແລະຜູ້ອຳນວຍການດ້ານວິຊາຄຣູພາກປະຕິບັດ .

ຄູ່ມືເຫລັ້ມນີ້ ກໍເປັນອີກເຫລັ້ມນຶ່ງ ທີ່ທ່ານ ບຸນໂຮມ ໄດ້ຂົນຂວາຍຈັດເຮັດຂຶ້ນ ເພື່ອເປັນປໂຍດແກ່ນັກຮຽນຝຶກຫັດສອນ ຄຣູປະຈຳຊັ້ນ ຕລອດເຖິງຜູ້ມີຄວາມລັບຜິດຊອບໃນທາງກົງແລະທາງອ້ອມກ່ຽວກັບການຝຶກຫັດສອນ.

ຂໍ້ແນະນຳຕ່າງໆທີ່ບັນຈຸໄວ້ ໃນຄູ່ມືນ້ອຍໆເຫລັ້ມນີ້ ຄົງຈະເປັນແນວທາງໃຫ້ນັກຮຽນຝຶກຫັດສອນ ໃນການປະຕິບັດວິຊາອາຊີບຂອງຕົນໄດ້ຢ່າງດີ.

ວິທຍາລັຍຄຣູປາກເຊ ຂໍຂອບຄຸນ ທ່ານ ບຸນໂຮມ ພົມມະວົງໄຊຍ໌ ທີ່ໄດ້ອຸດສາພຍາຍາມລຽບລຽງຂຶ້ນມາ ເປັນເຫລັ້ມຢ່າງສົມບູນ ແລະຫວັງວ່າຄູ່ມືເຫລັ້ມນີ້ຄົງຈະເປັນປໂຍດແກ່ວົງການຝຶກຫັດຄຣູຕາມສົມຄວນ.

ປາກເຊ ວັນທີ ໕ ກໍຣະກະດາ ໑໙໖໘

ອຸດອນ ວາຣິນທຣະສັກ

ອາຈານ , ຜູ້ອຳນວຍການວິທຍາລັຍຄຣູ ປາກເຊ.

# ຄຳນຳຂອງຜູ້ຂຽນ

ຄູ່ມືຝຶກສອນ ທີ່ຢູ່ໃນມືຂອງທ່ານ ຂະນະນີ້ ໄດ້ຈັດເຮັດຂຶ້ນເພື່ອຈະອຳນວຍຄວາມສະດວກ ໃຫ້ແກ່ນັກຮຽນຝຶກສອນ, ຄຣູປະຈຳຊັ້ນອາຈານຝຶກສອນ ຜູ້ອຳນວຍການຝຶກສອນ ທ່ານຫົວໜ້າໝວດໂຮງຮຽນ ໂດຍສະເພາະ.

ໃນນາມຂອງພະແນກຝຶກສອນ ຂອງວິທຍາລັຍຄຣູປາກເຊຂໍສແດງຄວາມຂອບພະຄຸນອາຈານ ອຸດອນ ອາຣິນທຣະສັກ ຜູ້ອຳນວຍການວິທຍາລັຍຄຣູແຫ່ງນີ້ ທີ່ໃຫ້ກຳລັງໃຈ ສນັບສນູນຕລອດຈົນໄດ້ໃຫ້ຄຳແນະນຳ ຊຶ່ງສາມາດເຮັດໃຫ້ການຝຶກສອນຂອງວິທຍາລັຍຄຣູປາກເຊ ໄດ້ເປັນຮູບຮ່າງຂຶ້ນມາ ໂດຍປະຈັກຕາ. ນອກຈາກນີ້ພະແນກຝຶກສອນກໍຂໍຂອບໃຈນຳທ່ານຜູ້ກວດການສຶກສາ ທ່ານຫົວໜ້າໝວດແລະທ່ານອາຈານໃນວິທຍາລັຍຄຣູທີ່ໄດ້ອຸດສາພະຍາຍາມໃຫ້ຄຳແນະນຳຕັກເຕືອນ ຈົນສາມາດເຮັດໃຫ້ການຝຶກສອນຂອງນັກຮຽນຄຣູສົມບູນຂຶ້ນກວ່າເກົ່າ.

ສຸດທ້າຍນີ້ ພະແນກຝຶກສອນ ຂໍຂອບໃຈນຳທ່ານທຸກທ່ານ ທີ່ມີສ່ວນຊ່ວຍໃນການຈັດເຮັດໜັງສືນ້ອຍເຫຼັ້ມນີ້ ແລະຫວັງເປັນຢ່າງຍິ່ງວ່າ ການມີສ່ວນຮ່ວມ ແລະຊ່ວຍເຫລືອຂອງທ່ານຈະອຳນວຍໃຫ້ນັກຮຽນຝຶກສອນ ປະສົບຄວາມສຳເຣັດ ແລະມີປະສິດທິພາບໃນການຝຶກສອນດີຍິ່ງຂຶ້ນ.

ບຸນໂຮມ ພົມມະວົງໄຊຍ໌

ພະແນກຝຶກສອນ

**ວິທຍາລັຍ ຄຣູ ປາກເຊ.**

# ສາລະບັນ


ຄຳນຳຂອງຜູ້ອຳນວຍການ ............

ຄຳນຳຂອງຜູ້ຂຽນ ............

ກົດລະບຽບຂອງນັກຮຽນຄູທີ່ສົ່ງອອກຝຶກຫັດສອນ ............ ໑

ການ ຝຶກສອນຂອງທ່ານ ............ ໖

ບຸກຄົນທີ່ກ່ຽວກັບວຽກຝຶກຫັດສອນ ............ ໗

ໜ້າທີ່ຂອງທ່ານທີ່ມີຕໍ່ວິທຍາລັຍຄູເວລາອອກຝຶກຫັດສອນ ............ ໘

ສິ່ງທີ່ທ່ານຕ້ອງຈົດຈຳຂນະອອກຝຶກຫັດສອນ ............ ໙

ບົດບາດຂອງຜູ້ອຳນວຍການຝຶກຫັດສອນ ............ ໑໔

ບົດບາດຂອງອາຈານຝຶກຫັດສອນ ............ ໑໕

ບົດບາດຂອງຄູປະຈຳຊັ້ນ ............ ໑໕

ການວັດຜົນການສອນ ............ ໑໖

ຄວາມສຳພັນຣະຫວ່າງຄູແລະນັກຮຽນຝຶກຫັດສອນ ............ ໒໐

ໜ້າທີ່ຂອງທ່ານເວລາອອກ ຝຶກຫັດສອນ ............ ໒໒

ການປະຕິບັດຕົນຂອງນັກຮຽນ ຝຶກຫັດສອນ ............ ໒໘

ແບບການກວດຜົນປະຕິບັດງານດ້ວຍນັກຮຽນຄູເອງ ............ ໓໕

ຂໍ້ແນະນຳຫຍໍ້ໆກ່ຽວກັບວິຊາຄູ. ການຕຽມການສອນ ............ ໓໙

ຕົວຢ່າງ ບົດສອນວິທຍາສາດ ............ ໔໓

ຫລັກການສອນໂດຍຫຍໍ້ ............ ໔໑

ສິ່ງທີ່ ນັກຮຽນຝຶກຫັດສອນຕ້ອງຈົດຈຳ ............ ໔໓

ການສອນອ່ານໃນຊັ້ນປະຖົມ ໑ ............ ໔໘


# ກົດລະບຽບຂອງນັກຮຽນຄູທີ່ຖືກສົ່ງອອກ ໄປຝຶກສອນຕາມໂຮງຮຽນຫມູ່ບ້ານຕ່າງໆ

ນັກຮຽນຝຶກຫັດຄູທີ່ສົ່ງອອກໄປຝຶກຫັດສອນຕາມໂຮງຮຽນ ໃນຫມູ່ບ້ານຕ່າງໆຈະຕ້ອງຖືກົດລະບຽບ ທີ່ແຈ້ງລົງໄປຂ້າງລຸ່ມນີ້ ຢ່າງເຄັ່ງຄັດ

## ບົດທີ່ ໑

## ຂໍ້ບັງຄັບທົ່ວໄປ

<u>ມາຕຣາ ໑.</u> ແມ່ນຄູແລະຫົວຫນ້າຫມວດໂຮງຮຽນເປັນຜູ້ດູແລເບິ່ງແຍງດ້ານກິຣິຍາ ມາຣະຍາດ ຂອງນັກຮຽນຝຶກຫັດຄູ ເຫມືອນກັນກັບເຈົ້າຫນ້າທີ່ວິທຍາລັຍຄູ .

<u>ມາຕຣາ ໒.</u> ຖ້ານັກຮຽນຄູຫາກຂາດມາຣະຍາດໄປ ໃນທາງທີ່ຈະພາໃຫ້ເກີດຄວາມເຊື່ອມເສັຽແລ້ວ ຈະແມ່ນຄູ ຫລືຫົວຫນ້າຫມວດນັ້ນໆເປັນຜູ້ຕັກເຕືອນກ່ອນ. ຖ້າຫາກວ່າຍັງບໍ່ມີການປະຕິບັດຕາມແລ້ວ ຄູຫລືຫົວຫນ້າຫມວດ ຈະຕ້ອງສົ່ງລາຍງານຫາທ່ານຜູ້ອຳນວຍການວິທຍາລັຍຄູ ແລະສົ່ງສຳເນົາສບັບນຶ່ງ ເຖິງທ່ານຜູ້ກວດການປະຖົມສຶກສາປະຈຳແຂວງ.

<u>ມາຕຣາ ໓.</u> ເມື່ອນັກຮຽນຄູຂາດໂຮງຮຽນ ຂາດການສອນ ຫລືມີນັກຮຽນຄົນໃດຄົນນຶ່ງຫາກທຳການສອນບໍ່ເປັນທີ່ພໍໃຈຢ່າງຍິ່ງ ຫົວຫນ້າຫມວດ ຕ້ອງລາຍງານຫາຜູ້ອຳນວຍການວິທຍາລັຍຄູ ໃຫ້ຊາບ.

<u>ມາຕຣາ ໔.</u> ນັກຮຽນຄູທີ່ຂາດໂຮງຮຽນນັບແຕ່ຊົ່ວໂມງນຶ່ງເປັນຕົ້ນໄປ ຈະໃຫ້ເຂົ້າຫ້ອງຮຽນໄດ້ ກໍເມື່ອໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກຄູຮັບຜູ້ຜິດຊອບ ຫລືຫົວຫນ້າຫມວດໂຮງຮຽນນັ້ນ.

**ມາດຕາ ໕.** ການມາໂຮງຮຽນບໍ່ທັນຫລາຍຄັ້ງ ຈະຕ້ອງໄດ້ຮັບຄະແນນບໍ່ດີໃນດ້ານກິຣິຍາ. ເຣື່ອງນີ້ຫົວຫນ້າຫມວດຈະຕ້ອງລາຍງານເຖິງຜູ້ອຳນວຍການວິທຍາລັຍຄຣູ ດ້ວຍເຫດນີ້ ຄຣູປະຈຳຊັ້ນຈະຕ້ອງໄດ້ບັນທຶກລົງໃນສມຸດຝຶກສອນປະຈຳຕົວຂອງນັກຮຽນ.

**ມາດຕາ ໖.** ທຸກໆແລງມາ ເມື່ອສິ້ນຈາກການປະຕິບັດງານປະຈຳວັນແລ້ວ ໃຫ້ນຳສມຸດບັນທຶກຂອງໃຜລາວໄປສເນີຕໍ່ຄຣູຜູ້ຮັບຜິດຊອບ ຫລືຫົວຫນ້າຫມວດ ຫລືຫົວຫນ້າເຄິ່ງຫມວດປະຈຳໂຮງຮຽນນັ້ນໆ,

**ມາດຕາ ໗.** ກ່ອນນັກຮຽນຈະສັນຈອນໄປມາທາງໃດກໍຕາມ ຈະຕ້ອງໄດ້ຮັບອະນຸຍາດຈາກຜູ້ຮັບຜິດຊອບ ຫລືຫົວຫນ້າຫມວດ ຫລືຫົວຫນ້າເຄິ່ງຫມວດເສັຽກ່ອນ. ການອະນຸຍາດ ນັບແຕ່ ໒໔ ຊົ່ວໂມງຂຶ້ນໄປ ຈະຕ້ອງລາຍງານໃຫ້ຜູ້ອຳນວຍການວິທຍາລັຍຄຣູ ແລະທ່ານຜູ້ກອດການປະຖົມສຶກສາປະຈຳແຂວງຊາບນຳ

**ມາດຕາ ໘.** ຫ້າມນັກຮຽນທຸກຄົນມີອາວຸດ ຍຸທປະກອນໄວ້ໃນຄວາມຄອບຄອງທຸກໆຊະນິດ.

## ບົດທີ ໒

## ວ່າດ້ວຍການສັງຄົມ

**ມາດຕາ ໙.** ຫ້າມນັກຮຽນຄຣູ ທຳການຕິດຕໍ່ຣະຫວ່າງຊູ້ສາວ ແນວທາງທີ່ຈະພາໃຫ້ສູນເສັຽຊື່ສຽງໃນຍາມປະຕິບັດການຝຶກຫັດສອນ.

**ມາດຕາ ໑໐.** ຫ້າມນັກຮຽນຄຣູ ຫລິ້ນການພະນັນທຸກໆປະເພດ.

**ມາດຕາ ໑໑.** ຫ້າມນັກຮຽນຄຣູ ດື່ມນ້ຳເມົາທຸກໆຊະນິດ ພ້ອມທັງຢາເສບຕິດທຸກໆປະເພດ.



**ມາດຕາ ໑໒.** ຫ້າມນັກຮຽນຄຣູ ອອກໃນຍາມບຸນພິທີຕ່າງໆໃນບ້ານນັ້ນເປັນຕົ້ນວ່າ: ການຂາຍດອກໄມ້ໃນຍາມບຸນ, ມ່ອງຜ້າ, ຟ້ອນລຳວົງ ແລະອື່ນໆ (ເວັ້ນເສັຽໃນກໍຣະນີພິເສດຊຶ່ງຄຣູປະຈຳຊັ້ນ ທ່ານຫົວຫນ້າຫມວດເປັນຜູ້ຮັບຜິດຊອບໂດຍກົງ).

**ມາດຕາ ໑໓** ຫ້າມນັກຮຽນຄຣູໄປຊູມແຊວໃນບ້ານເຮືອນ ຂອງຊາວບ້ານເປັນເດັດຂາດ ຕົວຢ່າງຊູມຕຳສົ້ມ ຫມາກຮຸ່ງ ຫລືດື່ມເຫລົ້າເມົາຢາ ເປັນຕົ້ນ.

**ມາດຕາ ໑໔** ຫ້າມນັກຮຽນຄຣູ ໄປຊູມແຊວເຂົ້າປ່າ ຫລືສະຖານທີ່ຍ່ອນໃຈທຸກໆປະເພດ.

**ມາດຕາ ໑໕** ຫ້າມນັກຮຽນຄຣູ ກະທຳການສິ່ງໃດສິ່ງນຶ່ງ ທີ່ຈະເປັນການກະທົບກະເທືອນ ຫລືລົບກວນແກ່ຊາວບ້ານ (ເປັນຕົ້ນວ່າ ຂຶ້ນເຮືອນສູງລົງເຮືອນຕ່ຳ).

**ມາດຕາ ໑໖** ຫ້າມນັກຮຽນຄຣູທຸກໆຄົນຫຍຸ້ງກ່ຽວໃນດ້ານການເມືອງ.

## ບົດທີ ໓

## ວ່າດ້ວຍການນຸ່ງຖື

**ມາດຕາ ໑໗:** ການນຸ່ງຫົ່ມ ຈະຕ້ອງປະຕິບັດດັ່ງຕໍ່ໄປນີ້:

ກ) ໃນຍາມອອກປະຕິບັດງານ ຈະຕ້ອງນຸ່ງເຄື່ອງແບບຂອງໂຮງຮຽນ.

ຂ) ນອກຈາກໂມງປະຕິບັດງານແລ້ວ ຈະຕ້ອງນຸ່ງເຄື່ອງໃຫ້ຮຽບຮ້ອຍ.

**ມາດຕາ ໑໘:** ຫ້າມນັກຮຽນຄຣູ ນຳເອົາເຄື່ອງອັນມີຄ່າ ເຊັ່ນ ເພັດພອຍ ນາກ,

ເງິນ ຄຳ ເຂົ້າໄປໄວ້ໃນຄວາມຄອບຄອງ. ຈຳນວນເງິນກາຍ ໑໐໐໐ ກີບ ( ພັນກີບ ) ຂຶ້ນໄປ ຈະຕ້ອງໄປຝາກນຳທ່ານຫົວໜ້າໝວດ ຫລືຫົວໜ້າເຄິ່ງໝວດ. ການຈະເອົາເງິນອອກໄປໃຊ້ທຸກໆເທື່ອ ຕ້ອງມີການເຊັນລັບເພື່ອເປັນຫລັກຖານ.

## ບົດທີ ໔

## ວ່າດ້ວຍການບົວຣະບັດທີ່ຢູ່ທີ່ອາໄສ.

ມາຕຣາ ໑໙. ສະຖານທີ່ນັກຮຽນພັກພາອາໄສນັ້ນ ຈະຕ້ອງຮັກສາໃຫ້ສະອາດຢູ່ສເມີ. ຖ້າສະຖານທີ່ເໝາະສົມ ໃຫ້ປູກດອກໄມ້ ຢູ່ທາງໜ້າບ້ານ.

ມາຕຣາ ໒໐ ນັກຮຽນຄຣູທຸກໆຄົນ ຈະຕ້ອງທຳສວນຄົວ ປະຈຳສະຖານທີ່ຂອງຕົນ ຢ່າງນ້ອຍຜູ້ລະສອງໝານ ( ກວ້າງ ໑ ແມັດ ຍາວ ໓ ແມັດ ) ແລະລ້ຽງໄກ່ຜູ້ລະສອງຕົວຂຶ້ນໄປ.

ມາຕຣາ ໒໑: ການດັດແປງສະຖານທີ່ອາໄສທຸກໆຄັ້ງ ຈະຕ້ອງໄດ້ລັບຄວາມເຫັນຊອບຈາກເຈົ້າຂອງ ສະຖານທີ່ເສັຽກ່ອນ.

## ບົດທີ ໕

## ວ່າດ້ວຍກິຈການພິເສດ.

ມາຕຣາ ໒໒ ນັກຮຽນຄຣູທຸກຄົນມີໜ້າທີ່ຊ່ວຍເຫລືອ :

ກ. ໃນການຮັກສາຄວາມສະອາດຈົບງາມຂອງໂຮງຮຽນ.

ຂ. ໃນການບົວຣະບັດຮັກສາຊັບສົມບັດຂອງໂຮງຮຽນຮ່ວມກັນກັບຄຣູປະຈຳຊັ້ນ.

ຄ. ໃນການພັທນາໂຮງຮຽນໃຫ້ຮຸ່ງເຮືອງຂຶ້ນ.



ມາຕຣາ ໒໓: ນັກຮຽນຄຣູທຸກຄົນມີໜ້າທີ່ຊ່ວຍເຫລືອຊາວບ້ານ ໃນການປຸກສ້າງສິ່ງທີ່ເປັນສາທາຣະນະປໂຍດ ເປັນຕົ້ນວ່າ ຂຸດນ້ຳສ້າງ ປຸກສາລາ ສ້ອມແປງຖນົນຫົນທາງ ແລະອື່ນໆ.

ມາຕຣາ ໒໔: ນັກຮຽນຄຣູທຸກຄົນມີໜ້າທີ່ພາຍໃຕ້ຄວາມດູແລ ຂອງຄຣູຜູ້ຮັບຜິດຊອບ ແລະຫົວໜ້າໝວດ ຫລືຫົວໜ້າເຄິ່ງໝວດ ໃນການແນະນຳຊາວບ້ານ ທາງດ້ານອະນາມັຍ ກິລາ ແລະສັງຄົມເປັນຕົ້ນ.

ຣະບຽບທີ່ກ່າວມາຂ້າງເທິງນີ້ ເປັນຣະບຽບເພີ່ມເຕີມຂໍ້ຣະບຽບພາຍໃນຂອງ ວິທຍາລັຍຄຣູ.

ປະກາດອອກໃຊ້ ເມື່ອວັນທີ່ ໒໐ ທັນວາ ໑໙໖໖.

ຜູ້ອຳນວຍການວິທຍາລັຍຄຣູປາກເຊ,

ເຊັນແລະປະທັບຕຣາ

( ອຸດອນ ວາຣິນທຣະສັກ )

# ການຝຶກສອນຂອງທ່ານ

ຂະນະນີ້ທ່ານກຳລັງເຣີ່ມອອກດຳເນີນງານການຝຶກສອນຂອງທ່ານ ແລະກຳລັງປະຕິບັດຢູ່ຢ່າງຕື່ນເຕັ້ນ, ທາງວິທຍາລັຍຄຣູ ພຍາຍາມເອົາໃຈໃສ່ຊ່ວຍເຫລືອ ແລະໃຫ້ກຳລັງໃຈແກ່ທ່ານ ກ່ຽວກັບການຝຶກສອນທຸກໂອກາດ.

ກ່ອນອື່ນ ວິທຍາລັຍຄຣູ ຂໍສແດງຄວາມຍິນດີ ໃນຄວາມສຳເຣັດທີ່ທ່ານ ຈະໄດ້ຮັບ ໄວ້ລ່ວງໜ້າ. ການຝຶກສອນນີ້ ໃນຣະຍະເຣີ່ມຕົ້ນຂອງທ່ານທີ່ຈະກ້າວໄປສູ່ອາຊີບຂອງຄຣູ ແລະເປັນຜົນກຳໄລແລະປະສົບການທີ່ສຳຄັນກ່ຽວກັບການຝຶກສອນ ເປັນຄຣູຂອງທ່ານ ໃນເບື້ອງຕົ້ນ. ກ່ຽວກັບການສອນຕົວທ່ານກໍຈະໄດ້ມີໂອກາດໄດ້ທົດລອງ ທິສດີການຮຽນຮູ້ຕ່າງໆ ທີ່ໄດ້ຮຽນມາຈາກວິທຍາລັຍຄຣູ ໃນສພາບການທີ່ເປັນຈິງແລະລົງມືເຮັດແທ້ໆ. ເພື່ອໃຫ້ສຳເຣັດຕາມຄວາມປະສົງ ແລະຕາມຄວາມຄາດໝາຍ ຂອງການຝຶກສອນຂອງທ່ານ ທາງວິທຍາລັຍຄຣູ ໄດ້ຂໍຮ້ອງໃຫ້ຄຣູທີ່ມີປະສົບການກ່ຽວກັບການສອນ ຄອຍໃຫ້ຄຳແນະນຳ ແລະຊ່ວຍເຫລືອໃນຣະຍະທີ່ທ່ານຝຶກຫັດແລະໃນຂະນະດຽວກັນນີ້ ທາງວິທຍາລັຍກໍຈະສົ່ງ ອາຈານຜູ້ຝຶກສອນອອກໄປໃຫ້ຄຳແນະນຳແກ່ທ່ານຢ່າງໃກ້ຊິດອີກ ອັນນີ້ເພື່ອສນອງຄວາມຕ້ອງການ ແລະຄວາມສົນໃຈຂອງທ່ານກ່ຽວກັບການຝຶກສອນ ໃຫ້ຫລາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.



# ບຸກຄົນທີ່ກ່ຽວກັບງານຝຶກສອນ.

ໜັງສືຄູ່ມືການຝຶກສອນນີ້ ຈັດຂຶ້ນໂດຍມີຈຸດປະສົງ ທີ່ຈະໃຫ້ຄວາມກະຈ່າງແຈ້ງແກ່ທ່ານດ້ານການຝຶກສອນ. ເນື້ອເຣື່ອງຂອງໜັງສືພິມເຫລັ້ມນີ້ ສ່ວນຫລາຍປະກອບດ້ວຍຂໍ້ຄິດ ແລະຂໍ້ສເນີແນະນຳກ່ຽວກັບການຝຶກສອນໂດຍກົງ ການເປັນເຊັ່ນນີ້ ຕົວທ່ານເອງຈຶ່ງໄດ້ພິຈາຣະນາເບິ່ງວ່າອັນໃດແດ່ທີ່ເຫັນສົມຄວນຈະຮັບຈາກການຝຶກສອນໂດຍສເພາະແມ່ນໃນຣະຍະການຝຶກສອນ.

ໜັງສືຄູ່ມືເຫລັ້ມນີ້ ຄົງຈະອຳນວຍປໂຍດ ເພື່ອຈະກໍ່ໃຫ້ເກີດຄວາມຄິດໃໝ່ໆ ຄວາມເຂົ້າໃຈອັນດີຣະຫວ່າງ ວິທຍາລັຍຄຣູ ແລະໂຮງຮຽນຝຶກສອນທຸກຄົນ ທີ່ກ່ຽວກັບການຝຶກສອນໄດ້ແກ່.

- ທ່ານ ຜູ້ກວດປະຖົມສຶກສາປະຈຳແຂວງ.
- ທ່ານ ຜູ້ອຳນວຍການວິທຍາລັຍຄຣູປາກເຊ
- ທ່ານ ຫົວໜ້າໝວດໂຮງຮຽນ,
- ທ່ານ ຜູ້ອຳນວຍການຝຶກສອນ.
- ທ່ານ ອາຈານ ຝຶກຫັດສອນ.
- ທ່ານ ອາຈານ ວິທຍາລັຍຄຣູ
- ຄຣູ ປະຈຳຊັ້ນ.
- ນັກຮຽນຝຶກຫັດສອນ ແລະ
- ນັກຮຽນໃນໂຮງຮຽນຝຶກສອນ.

## ຫນ້າທີຂອງທ່ານທີມີຕໍ່ວິທຍາລັຍ ໃນຣະຫວ່າງອອກຝຶກສອນ

ໃນຍາມນີ້ ທ່ານອອກໄປທຳການຝຶກຫັດສອນ ໃນໂຮງຮຽນ ຝຶກສອນນັ້ນ ທ່ານເອງໄດ້ຊື່ວ່າ ; ເປັນຜູ້ຮັບຫນ້າທີ່ເຫມືອນກັບການທູດ ຊັ້ນຢ້ຽມຂອງວິທຍາລັຍຄຣູ ຄືຈະຕ້ອງເຮັດທຸກຢ່າງ ເພື່ອຊື່ສຽງຂອງວິທຍາລັຍ ເປັນເບື້ອງຕົ້ນແລະເພື່ອຜົນງານຂອງທ່ານ ເປັນອັນດັບສອງລົງມາ ທ່ານຕ້ອງສຳນຶກສເມີວ່າການກະທຳຂອງທ່ານທຸກຢ່າງຍ່ອມມີຜົນສທ້ອນກັບມາຍັງວິທຍາລັຍ ຊຶ່ງອາດຈະເປັນທາງກົງ ຫລືທາງອ້ອມກໍໄດ້ຕົວຢ່າງ ທ່ານສແດງຕົນ ບໍ່ເປັນທີ່ເຄົາຣົບຍຳເກງຂອງຄຣູປະຈຳຊັ້ນ ບໍ່ນັບຖືຄຣູປະຈຳຊັ້ນ ບໍ່ຕຽມການສອນ ບໍ່ພຍາຍາມອ່ານຕຳຣາຄົ້ນຄວ້າຕື່ມແຖມ ວາງຕົວບໍ່ເຫມາະສົມກັບການເປັນຄຣູ ມີຄວາມປະພຶດບໍ່ຈົບບໍ່ງາມ ເຫລົ່ານີ້ ຊື່ສຽງຂອງວິທຍາລັຍ ກໍຈະໄດ້ຮັບແຕ່ທາງທີ່ບໍ່ດີ ຊຶ່ງກົງກັນຂ້າມກັບ ຖ້າທ່ານປະກອບກິຈແຕ່ໃນທາງດີ ຊື່ສຽງຂອງວິທຍາລັຍກໍດີຕາມກັນ. ອີກປະການນຶ່ງ ທີ່ທ່ານຈະຕ້ອງຄຳນຶງສເມີ ຄືວ່າທ່ານຈະມີວິທີການສົ່ງເສີມຄວາມສັມພັນໃຫ້ດີຂຶ້ນ ຣະຫວ່າງ ຕົວທ່ານກັບການບໍຣິຫານ ການຝຶກສອນ, ຄຣູໃນໂຮງຮຽນຝຶກສອນ, ນັກຮຽນທີ່ທ່ານສອນ, ວິທຍາລັຍຄຣູ ແລະຫມູ່ບ້ານບ່ອນໂຮງຮຽນ ຕັ້ງຢູ່ນັ້ນໄດ້ຢ່າງໃດ ການກະທຳທຸກແນວຂອງທ່ານຄວນຈະໃຫ້ຄົນອື່ນເບິ່ງທ່ານວ່າ ທ່ານມີທັສນະຄະຕິດີ ຕໍ່ອາຊີບຄຣູມີຄວາມເຊື່ອຫມັ້ນ ແລະຮັກອາຊີບຄຣູແທ້ໆ.



## ສິ່ງທີທ່ານຈະຕ້ອງຈົດຈຳ ຂນະອອກຝຶກສອນ,

### ໑./ ຈົ່ງພຍາຍາມໄປສອນທຸກໆວັນ ຕາມວັນ ແລະເວລາຣາຊການ

ຖ້າຫາກທ່ານຕ້ອງການລາພັກຢຸດຣາຊການ ດ້ວຍເຫດຜົນທີ່ຈຳເປັນແທ້ໆ ເຊັ່ນຕົວທ່ານເຈັບປ່ວຍມີຍາດພີ່ນ້ອງໃນຄອບຄົວໄດ້ຮັບອັນຕຣາຍເຖິງກັບຕາຍຫລືເຫດການອື່ນໆ ຈົ່ງແຈ້ງໃຫ້ຄຣູປະຈຳຊັ້ນຂອງທ່ານຮູ້ເປັນອັນດັບນຶ່ງ ຖ້າເປັນໄປໄດ້ກໍຄວນຈະແຈ້ງໃຫ້ຮູ້ໄວ້ລ່ວງຫນ້າ ອັນດັບຕໍ່ໄປ ທ່ານຈະຕ້ອງແຈ້ງໃຫ້ທ່ານຫົວຫນ້າຫມວດຜູ້ອຳນວຍການຝຶກສອນຮູ້ນຳອີກ.

### ໒/ ຈົ່ງເປັນຜູ້ຊື່ຕົງຕໍ່ເວລາ

ຈົ່ງພຍາຍາມ ໄປຝຶກສອນໃຫ້ທັນເວລາປົກກະຕິແລ້ວຕ້ອງໄປຮອດໂຮງຮຽນຝຶກສອນຢ່າງຊ້າກ່ອນໂມງເຂົ້າໂຮງຮຽນ ໔໐ ນາທີ ອັນນີ້ຈະໄດ້ມີໂອກາດຕຽມຕົວພຽງພໍ ຊຶ່ງຈະກໍ່ໃຫ້ເກີດຄວາມເຊື່ອຫມັ້ນໃນຕົວເອງຫລາຍຂຶ້ນ ນອກຈາກນັ້ນ ການກົງຕໍ່ເວລາທ່ານຍັງຈະໄດ້ຮັບການຍົກຍ້ອງແລະນັບຖືຈາກຄຣູປະຈຳຊັ້ນ ແລະນັກຮຽນຂອງທ່ານດ້ວຍ.

### ໓./ ຈົ່ງເຮັດກິຈທຸຣະຝຶກສອນ ກ່ອນກິຈການອື່ນໆ

ໃນຣະຍະທີ່ທ່ານອອກທຳການຝຶກສອນນັ້ນ ຂໍໃຫ້ທ່ານອຸທິດເວລາໃຫ້ຫລາຍເທົ່າທີ່ຈະມີໄດ້ ເພື່ອຊ່ວຍເຫລືອກິຈການງານຈັດຂຶ້ນໃນໂຮງຮຽນ.

ສ່ວນນັກຮຽນຝຶກສອນໃນໂຮງຮຽນເຂດເທສບານ ແລະກັບເຂົ້າກິນນອນໃນວິທຍາລັຍນັ້ນ ກິຈກັມງານຕ່າງໆທີ່ຈັດຂຶ້ນໃນວິທຍາລັຍນັ້ນ ຄວນຈະໄດ້ເຮັດໃນອັນດັບຫລັງ ຫລືເພື່ອມີໂອກາດແລະເວລາອຳ

ມອບໄດ້.

## ໔./ ຖ້າທ່ານມີບັນຫາ ຫລືຄຳຖາມກ່ຽວກັບການຝຶກສອນ

ການຝຶກສອນ ຈົ່ງຮີບແຈ້ງໃຫ້ອາຈານຝຶກສອນ ຫລືຜູ້ອຳນວຍການຝຶກສອນຮູ້ ເພື່ອເພິ່ນຈະໄດ້ຫາທາງແກ້ໄຂ. ນັກຣຽນຝຶກສອນທຸກຄົນມີບັນຫາຂໍ້ຂັດຂ້ອງຫລາຍໃນດ້ານການປະຕິບັດໜ້າທີ່ ເຊັ່ນດ້ານການຢູ່ກິນທີ່ພັກອາໃສດ້ານການສິດສອນ ແລະປົກຄອງໂຣງຣຽນເປັນຕົ້ນບັນຫາເຫລົ່ານັ້ນແມ່ນຕົວທ່ານເປັນຜູ້ຊອກຊ່ອງທາງ ແກ້ໄຂດ້ວຍຕົນເອງເສັຽກ່ອນ ຖ້າຈຳເປັນແທ້ໆບໍ່ຮູ້ຈັກຈະແກ້ໄຂແນວໃດດີ ຈົ່ງຍົກຖາມທ່ານຜູ້ຮູ້

**໕./** ຈະເຣັດແນວໃດ ທ່ານຈຶ່ງຈະໄດ້ພົນພໍໃຈ ຈາກການຝຶກຫັດສອນຂອງທ່ານນັ້ນຂໍ້ສເນີແນະນຳ ຂໍ້ຄິດເຫັນ ແລະການວັດຜົນການຝຶກສອນຂອງທ່ານຈາກຄຣູປະຈຳຊັ້ນຈະ ເປັນສ່ວນນຶ່ງ ທີ່ຈະນຳມາ ພິຈາຣະນາ ໃນການວັດຜົນ ການຝຶກສອນຄັ້ງສຸດທ້າຍຮ່ວມກັບອາຈານຝຶກສອນຂອງວິທຍາລັຍ.

## ສິ່ງທີ່ຈະຕ້ອງປະຕິບັດໃນເວລາອອກຝຶກສອນ

ທາງວິທຍາລັຍຈະສົ່ງທ່ານອອກໄປຝຶກສອນຕາມໂຣງຣຽນຕ່າງໆ ທີ່ທາງວິທຍາລັຍໄດ້ຕິດຕໍ່ແລະກຳນົດໄວ້. ເພື່ອໃຫ້ຕົວທ່ານແລະໂຣງຣຽນບ່ອນທ່ານໄປຝຶກສອນມີປະສິດທິພາບດີຂຶ້ນທຸກໆດ້ານ ທ່ານຈະຕ້ອງຮັບຜິດຊອບຮ່ວມກັບຄຣູປະຈຳຊັ້ນ ທ່ານຫົວໜ້າໝວດ ຄນະຄຣູໃນໂຣງຣຽນຕລອດຮອດໝູ່ບ້ານທີ່ໂຣງຣຽນຝຶກສອນຕັ້ງຢູ່.

ໃນດ້ານອອກຝຶກສອນນັ້ນ ສິ່ງທີ່ທ່ານຄວນຈະໄດ້ເຣັດກ່ອນສິ່ງອື່ນໃດມີຢູ່ ໔ ຂັ້ນ.



**ຂັ້ນຕົ້ນ** ຂັ້ນທຳຄວາມລຶ້ງເຄີຍກັບນັກຣຽນ ແລະຊ່ວຍເຫລືອຄຣູປະຈຳຊັ້ນໃນວຽກການທົ່ວໆໄປ. ໃນຣະຍະທຳອິດຄຣູປະຈຳຊັ້ນອາດຈະໃຫ້ທ່ານໄດ້ມີໂອກາດສັງເກດການສອນຂອງເຂົາປະມານ ໒–໓ ວັນ ກ່ອນທ່ານເອງຈະລົງມືສອນແທ້ໆ. ການຕັດສິນວ່າທ່ານຈະຕ້ອງໃຊ້ເວລາສັງເກດການສອນຂອງຄຣູປະຈຳຊັ້ນດົນເທົ່າໃດນັ້ນ ຂຶ້ນຢູ່ກັບທ່ານຮູ້ສຶກວ່າຕົວເອງພ້ອມທີ່ຈະລົງມືສອນແລ້ວຫລືຍັງ ທ່ານຮູ້ຈັກເດັກນ້ອຍທຸກຄົນດີພໍແລ້ວຫລືບໍ່ ທ່ານເຂົ້າໃຈເນື້ອວິຊາ ແລະປະມວນການສອນວ່າກິນຄວາມກວ້າງຫລືແຄບມາກນ້ອຍປານໃດ ເຣື່ອງດັ່ງກ່າວຈະເປັນສິ່ງທີ່ຈະບອກໃຫ້ທ່ານຮູ້ວ່າ ຣະຍະການສັງເກດການສອນຂອງທ່ານຈະໃຊ້ເວລາດົນເທົ່າໃດ.

## ຂໍ້ສເນີແນະນຳ

໑/ ໃຫ້ຮູ້ຈັກກັບນັກຣຽນໂດຍສຶກສາຈາກບັນຊີເອີ້ນຊື່ ທະບຽນຕ່າງໆແຜນຜັງລາຍຊື່ບ່ອນນັ່ງປະຈຳຊັ້ນ ຈາກການສັງເກດໃນຂນະນັກຣຽນເຣັດວຽກອາດເປັນນອກຫລືໃນຫ້ອງຣຽນກໍໄດ້.

໒./ ໃຫ້ຮູ້ຈັກກັບແບບຣຽນຫລັກສູດປະມວນການສອນ ອຸປກອນການສອນແລະອື່ນໆທີ່ກ່ຽວກັບການຣຽນການສອນ.

໓./ ໄດ້ຮູ້ ຈັກແລະສຶກສາວຽກທັງໝົດຂອງຄຣູປະຈຳຊັ້ນແຜນຜັງວຽກປະຈຳວັນຕລອດຈົນຮອດວິທີການຈັດຫ້ອງຣຽນໃນຮູບລັກສນະຕ່າງໆກັນ.

## ຂັ້ນທີ ໒

ຣະຍະນີ້ເປັນຣະຍະທີ່ທ່ານຈະສແດງອອກວ່າ ຕົວທ່ານເປັນຜູ້ມີສ່ວນຮ່ວມກັບຄຣູປະຈຳຊັ້ນຂອງທ່ານ ຄຣູປະຈຳຊັ້ນຈະປ່ອຍໃຫ້ທ່ານເຣັດວຽກທຸກຢ່າງແທນເຂົາ ເໝືອນດັ່ງທ່ານເຣັດໜ້າທີ່ ເປັນຄຣູສອນແທ້ໆ ເຊັ່ນຮ່ວມກັບຄຣູ ປະຈຳຊັ້ນວາງແຜນວຽກປະຈຳວັນ ຊ່ວຍ

ເຫລືອຄຣູປະຈຳຊັ້ນ ຄວບຄຸມດູແລເດັກໃນຫ້ອງຮຽນໃຫ້ເປັນຣະບຽບ ສິ່ງສຳຄັນຕົວທ່ານ ຕ້ອງສແດງໃຫ້ຄຣູປະຈຳຊັ້ນເຫັນວ່າທ່ານໄດ້ຮັບຄວາມໄວ້ວາງໃຈຈາກເຂົາ ຄຣູປະຈຳຊັ້ນເຊື່ອໝັ້ນໃນຕົວທ່ານ ເປັນຢ່າງດີແລ້ວວ່າໃນຂັ້ນຕໍ່ໄປທ່ານສາມາດແລະມີຄວາມພ້ອມຈະປະຕິບັດການສອນໄດ້

## ຂໍ້ແນະນຳ.

໑/ ກະຕຽມວັສດຸຕ່າງໆຈະໃຊ້ສອນປະຈຳວັນເຊັ່ນກະດານດຳ ປ້າຍສະແດງແຜນຜ້າສຳລີ ແຜນຜັງ ແລະອຸປກອນອື່ນໆທີ່ຈະນຳມາປະກອບການສອນ.

໒./ ຊ່ວຍເຫລືອນັກຮຽນເປັນລາຍບຸກຄົນ ເປັນໝູ່ ຊຶ່ງເຂົາເຫລົ່ານີ້ຕ້ອງການຄວາມຊ່ວຍເຫລືອຈາກທ່ານກ່ຽວກັບການຮຽນ.

໓./ ເປັນຜູ້ມີສ່ວນຮ່ວມໃນການປຶກສາຫາລືໃນຊັ້ນຮຽນທີ່ທຳໄດ້ຮັບມອບໝາຍກັບຄຣູປະຈຳຊັ້ນ ເພື່ອຖືກເຊີນໃຫ້ເຂົ້າຮ່ວມ.

໔./ ເປັນຜູ້ມີສ່ວນຮ່ວມກັບຄຣູປະຈຳຊັ້ນໃນການດູແລນັກຮຽນ ໃນຂະນະຮັບປະທານອາຫານ ໃນຂະນະນັກຮຽນກຳລັງຫລິ້ນໃນເດີ່ນ ຖ້າໂຮງຮຽນມີຫລາຍຊັ້ນກໍ່ຮ່ວມດູແລ ໃນຂະນະນັກຮຽນຂຶ້ນລົງໂຮງຮຽນ.

## ຂັ້ນທີ ໓

ຂັ້ນລົງມືປະຕິບັດວຽກສອນພາຍໃຕ້ຄວາມດູແລ ຂອງຄຣູປະຈຳຊັ້ນ ຣະຍະນີ້ຄຣູປະຈຳຊັ້ນ ຈະກຳນົດໃຫ້ທ່ານສອນຕາມວິຊາທີ່ທ່ານນັດທັງນີ້ກໍ່ຢູ່ໃນຄວາມພິຈາຣະນາຂອງຄຣູປະຈຳຊັ້ນວ່າ ທ່ານຈະສອນວິຊານັ້ນໆໄດ້ແລ້ວຫລືຍັງ ຢ່າງໃດກໍ່ຕາມນັ້ນ ຣະຍະທີ່ຄຣູປະຈຳຊັ້ນຈະສັງເກດແລະໃຫ້ຄຳແນະນຳແກ່ທ່ານຢ່າງໃກ້ຊິດ ເພື່ອຈະຊ່ວຍໃຫ້ທ່ານມີຄວາມເຊື່ອໝັ້ນໃນຕົວເອງຫລາຍຂຶ້ນ.



## ຂໍ້ແນະນຳ

໑./ ວາງແຜນການສອນແລະບັນທຶກການສອນຮ່ວມກັບຄຣູປະຈຳຊັ້ນ

໒./ ປະຕິບັດການສອນແລະວຽກຕ່າງໆ ພາຍໃຕ້ຄຳແນະນຳຂອງຄຣູປະຈຳຊັ້ນ ກ່າວຄື ກ່ຽວກັບວິທີສອນ ແລະນະໂຍບາຍຕ່າງໆກ່ຽວກັບການສອນ.

໓./ ຊ່ວຍຄຣູປະຈຳຊັ້ນໃນການຕຽມການສອນ ເຮັດຂໍ້ສອບເສັງແລະບົດຝຶກຫັດ ເພື່ອວັດຜົນການຮຽນຂອງເດັກ.

໔./ ຊ່ວຍເຫລືອຄຣູປະຈຳຊັ້ນໃນການຈັດການປະຊຸມ ແລະກິຈກັມນອກ ຫລັກສູດອື່ນໆຕລອດຈົນງານທຸຣະການ.

## ຂັ້ນທີ ໔

ຂັ້ນລົງມືປະຕິບັດການສອນແທ້ໆ ໃນຣະຍະນີ້ຄຣູປະຈຳຊັ້ນຈະໃຫ້ໂອກາດທ່ານສແດງທີ່ສຸດທີ່ທ່ານໄດ້ຮຽນມາໃຫ້ເຕັມອັດຕຣາ ແລະເວລາດຽວກັນຄຣູປະຈຳຊັ້ນ ກໍ່ຈະຕື່ມຄວາມຮັບຜິດຊອບໃຫ້ແກ່ຕົວທ່ານມາກຂຶ້ນເລື້ອຍໆຄາດເອົາວ່າ ເມື່ອກ່ອນຈະຈົບການຝຶກສອນຂອງທ່ານ ທ່ານເອງຈະສາມາດດູແລຊັ້ນຮຽນ ແລະສາມາດສອນໄດ້ຢ່າງມີປະສິດທິພາບ ເໝືອນກັນກັບ ຄຣູປະຈຳການແທ້ໆ.

## ຂໍ້ສເນີແນະນຳ.

໑./ ຕຽມບົດສອນ ແລະບັນທຶກບົດສອນຂອງທ່ານເອງ.

໒./ ລົງມືສອນໃຫ້ເກີດມີປະສິດທິພາບຫລາຍທີ່ສຸດໂດຍປາສຈາກການສັງເກດຂອງຄຣູປະຈຳຊັ້ນ.

໓./ ຕຽມສ້າງຂໍ້ທົດສອບແລະວັດຜົນການຮຽນດ້ວຍທ່ານເອງ

໔./ ຮັບຜິດຊອບວຽກປະຈຳວັນເຊັ່ນ ເອີ້ນຊື່ນັກຮຽນຕາມບັນຊີລາຍງານ

ການຂາດຮຽນຂອງນັກຮຽນຕໍ່ຄູປະຈຳຊັ້ນ ບັນທຶກເຫດການປະຈຳວັນຂອງນັກຮຽນ ຈົດແນມຜົນການສອບເສັງດ້ວຍຕົນເອງ

## ບົດບາດຂອງຜູ້ອຳນວຍການຝຶກສອນ

ເວົ້າໂດຍຫຍໍ້ແລ້ວ ຜູ້ອຳນວຍການຝຶກສອນເປັນຜູ້ປະສານງານໃນດ້ານການສຶກສາກ່ຽວກັບຝຶກສອນ ລະຫວ່າງວິທຍາລັຍກັບໂຮງຮຽນຝຶກສອນ ໝາຍຄວາມວ່າເຮັດວຽກຮ່ວມກັບຄູ ໂຮງຮຽນຝຶກສອນ ແລະຄນະອາຈານໃນວິທຍາລັຍໂດຍກົງ.

ຄວາມຮັບຜິດຊອບ ນອກເຫນືອໄປຈາກເຮື່ອງດັ່ງເວົ້າມານີ້ຜູ້ອຳນວຍກາກຝຶກສອນຍັງຕ້ອງຮັບຜິດຊອບ

໑./ ຈັດຕຽມ ແລະຄັດເລືອກຄູປະຈຳຊັ້ນຮ່ວມກັບຫົວຫນ້າໂຮງຮຽນ ເພື່ອເປັນທີ່ປຶກສາຂອງນັກຮຽນ ກ່ອນຣະຍະທີ່ນັກຮຽນຈະອອກຝຶກສອນ.

໒./ ຈັດຕຽມຫາສຖານທີ່ພັກພາອາໄສ ແລະອຸປກອນທີ່ຈຳເປັນຕ່າງໆໃຫ້ນັກຮຽນຮູ້ລ່ວງຫນ້າ.

໓./ ກຳນົດໃຫ້ມີການປະຊຸມ ສັມມະນາເປັນຄັ້ງຄາວໃນລະຫວ່າງນັກຮຽນທຳການຝຶກສອນ ອາດເປັນລາຍອາທິດລາຍເດືອນກໍໄດ້.

໔./ ກວດສອບເພື່ອຮູ້ຜົນຂອງການຝຶກສອນ ຮ່ວມກັບຫົວຫນ້າໂຮງຮຽນ ແລະຄູປະຈຳຊັ້ນ.

໕./ ເກັບຄແນນນັກຮຽນທີ່ໄດ້ຮັບຈາກ ການຝຶກສອນໄວ້ເປັນຣະບຽບ ເພື່ອໃຊ້ເປັນຂໍ້ອ້າງອີງໃນການທີ່ຈະວິຈັຍ ແລະແກ້ໄຂຂໍ້ບົກພ່ອງໃນຂັ້ນຕໍ່ໄປ.

໖/ ຊີ້ແຈ້ງຂ່າວ ແລະຄວາມເປັນໄປພາຍໃນວິທຍາລັຍໃຫ້ນັກຮຽນທີ່ອອກຝຶກສອນຮູ້ນຳ.



## ບົດບາດຂອງອາຈານຝຶກສອນ

ອາຈານຝຶກສອນຈະເຮັດວຽກຮ່ວມກັບໂຮງຮຽນຝຶກສອນ ໂດຍອອກໄປເບິ່ງການສອນຂອງທ່ານຮ່ວມກັບຄູປະຈຳຊັ້ນ ອັນນີ້ກໍເພື່ອຈະໄດ້ສັງເກດ ແລະພິຈາຣະນາຫາທາງຊ່ວຍກ່ຽວກັບການສອນໃຫ້ມີປະສິດທິພາບດີຂຶ້ນ ນອກຈາກນີ້ຍັງຕ້ອງຮັບຜິດຊອບ.

໑./ ກວດສອບການຝຶກສອນຂອງນັກຮຽນຝຶກສອນວ່າ ໄດ້ກ້າວຫນ້າໄປແລ້ວປານໃດ

໒./ ຊ່ວຍເຫລືອນັກຮຽນເກອບບັນຫາ ຫລືຄຳຖາມທີ່ນັກຮຽນຕ້ອງການຖາມ.

໓/ ເປັນຜູ້ຕິດຕໍ່ລະຫວ່າງ ວິທຍາລັຍກັບຕົວນັກຮຽນຝຶກສອນ.

## ບົດບາດຂອງຄູປະຈຳຊັ້ນ.

ຄຸນຄ່າ ແລະປະສົບການຕ່າງໆທີ່ນັກຮຽນຝຶກສອນຈະໄດ້ຮັບຈາກການຝຶກສອນນັ້ນຂຶ້ນຢູ່ກັບ ຄວາມຮ່ວມມືແລະທັສນະຄະຕິດີຂອງຄູປະຈຳຊັ້ນ ທີ່ມີຕໍ່ການຝຶກສອນ ດັ່ງນັ້ນເພື່ອຈະໃຫ້ຜົນດີຂອງການຝຶກສອນມີປະສິດທິພາບດີຂຶ້ນ ຄູປະຈຳຊັ້ນຈຳເປັນຕ້ອງໃຫ້ຄວາມຊ່ວຍເຫລືອແລະປະຕິບັດຫນ້າທີ່ຮັບຜິດຊອບໃນການນີ້ໂດຍ.

໑./ ໃຫ້ຄຳແນະນຳແກ່ເດັກ ພາຍໃນຊັ້ນຮຽນຂອງຕົນເອງ.

໒ / ສລະເວລາແລະອຸທິດກຳລັງກາຍ ກຳລັງໃຈເພື່ອໜ້າທີ່ຄູ.

໓./ ຄວນເຕັມໃຈຈະຮັບໜ້າທີ່ ແລະຄວາມຮັບຜິດຊອບເພີ່ມຕື່ມໃນການອົບຮົມ ໃຫ້ຄຳແນະນຳແກ່ນັກຮຽນຝຶກສອນ.

໔./ ໃຫ້ຄວາມສນິດສນົມເປັນກັນເອງກັບນັກຮຽນຝຶກສອນ ກ່ຽວກັບດ້ານວິຊາການ ແລະດ້ານສ່ວນຕົວ.

໕./ ຍົກຍ້ອງນັກຮຽນຝຶກສອນແລະເປັນຜູ້ທີ່ຄວນເຄົາລົບຜູ້ນຶ່ງຕໍ່ໜ້ານັກຮຽນໃນຊັ້ນໂດຍສະເພາະລະຍະທຳອິດຂອງການຝຶກສອນ.

໖ / ຮ່ວມກັບນັກຮຽນຝຶກສອນ ພິຈາຣະນາແກ້ໄຂບັນຫາການສອນແລະບັນຫາທາງວິນັຍ ການປົກຄອງຊັ້ນຮຽນ.

໗./ ກຳນົດໃຫ້ມີການປະຊຸມກັບນັກຮຽນ ຝຶກສອນລ່ວງໜ້າ.

໘./ ຊ່ວຍເຫລືອນັກຮຽນຝຶກສອນໃຫ້ເຂົ້າໃຈຄວາມແຕກຕ່າງຣະຫວ່າງບຸກຄົນໃນບັນດານັກຮຽນຢູ່ໃນຊັ້ນຮຽນ.

໙ / ວຽກຕ່າງໆທີ່ກຳນົດໃຫ້ນັກຮຽນຝຶກສອນເຮັດ ຄວນຈະໄດ້ພິຈາຣະນາຮ່ວມກັນ ແລະປະການສຳຄັນ ຄວນຈະໃຫ້ຄຳປຶກສາແນະນຳທຸກຄັ້ງ ເມື່ອນັກຮຽນຄູມີບັນຫາອັນນີ້ບໍ່ໝາຍຄວາມວ່າ ຈະມອບວຽກທັງໝົດໃຫ້ນັກຮຽນຝຶກສອນ.

໑໐./ ໃຫ້ຄວາມຮ່ວມມື ກັບທາງວິທຍາລັຍ ກ່ຽວກັບການວັດຜົນການຝຶກສອນຂອງນັກຮຽນ.

## ການວັດຜົນການຝຶກສອນ

ເຣື່ອງຂອງການວັດຜົນນັ້ນ ທາງວິທຍາລັຍຈະເປັນຜູ້ກຳນົດໃຫ້ອາຈະວັດວຽກການຝຶກສອນກ່ຽວກັບເຣື່ອງອັນໃດແດ່ ແລະວິທຍາລັຍຈະສົ່ງແບບການໃຫ້ຄແນນໄປໃຫ້ຄູປະຈຳຊັ້ນທຸກຄົນ ພໍໝົດໄຕຣມາດ ຄູປະຈຳຊັ້ນຈະສົ່ງໃບຄແນນຜົນການຝຶກສອນຂອງທ່ານໄປໃຫ້ຜູ້ອຳນວຍການຝຶກສອນທີ່ວິທຍາລັຍຄູ ນອກຈາກນັ້ນທາງວິທ-ຍາລັຍກໍຈະໄດ້ພິຈາຣະນາຄແນນຝຶກສອນ ທີ່ໄດ້ຈາກຄູປະຈຳຊັ້ນຮ່ວມກັບອາຈານຝຶກສອນຖືວ່າເປັນການຕັດສິນການວັດຜົນການຝຶກສອນຂອງທ່ານທີ່ຈະໄດ້ຮັບ.



# ການວັດຜົນການຝຶກສອນ

ພແນກຝຶກສອນ ໝວດວິຊາການສຶກສາ ວິທຍາລັຍຄູ ປາກເຊ

ຊື່ .................... ຊັ້ນຮຽນ .................... ຫລັກສູດ ....................

ໂຮງຮຽນຝຶກສອນ .................... ຊັ້ນສອນ ....................

**ກ.) ການວັດຜົນ** ໃຫ້ໝາຍຕີນກາລົງໃນຊ່ອງຕົວໜັງສືຕົວໃດຕົວນຶ່ງ

| ຂໍ້ຄວາມຕ່າງໆ | ກ | ຂ | ຄ | ງ | ຈ | ໝາຍເຫດ |
|---|---|---|---|---|---|---|
| ການນຸ່ງຫົ່ມ | | | | | | |
| ການເວົ້າຈາປາໃສ | | | | | | |
| ການມີຣະບຽບວິໄນດີ | | | | | | |
| ການສັງຄົມ | | | | | | |
| ຄວາມດຸໝັ່ນພາກພຽນ | | | | | | |
| ການຕຽມບົດສອນ | | | | | | |
| ຄວາມຊ່ອງແຄ້ວໃນການສອນ | | | | | | |
| ການຮູ້ຈັກເດັກແລະການປົກຄອງຊັ້ນ | | | | | | |
| ການກວດກາວຽກນັກຮຽນ | | | | | | |
| ຄວາມຮູ້ກ່ຽວກັບເນື້ອວິຊາທີ່ສອນ | | | | | | |
| ການບົວຣະບັດສະຖານທີ່ພັກອາໄສ | | | | | | |
| ການບົວຣະບັດເຄື່ອງໃຊ້ຕ່າງໆ | | | | | | |
| ການກະສິກັມແລະລ້ຽງສັດ | | | | | | |
| ເປັນຜູ້ມີຄວາມຮ່ວມມືດີ | | | | | | |
| ມີຄວາມເອົາໃຈໃສ່ໃນທາງໃຊ້ວັສດຸອຸປກອນການສອນ | | | | | | |

ກ່ອນໃຫ້ຄແນນ ຄວນຝຶກອ່ານຄຳແນະນຳໃນການຕັດສິນໃຫ້ຄແນນເສັຽກ່ອນ

## ການຕັດສິນຄແນນສເລັ່ຽ

ຂ/. ນັກຮຽນຄົນນີ້ ຂ້າພະເຈົ້າໄດ້ພິຈາຣະນາ ແລະຕັດສິນໂດຍຣອບຄອບ ທີ່ຖ້ວນແລ້ວວ່າ ສົມຄວນໄດ້ຮັບຄແນນສເລັ່ຽ ກ. ຂ. ຄ. ງ. ຈ.

ກະຣຸນາຂຽນຂໍ້ວິຈານ ປະກອບການໃຫ້ຄແນນ ດ້ານຫລັງ ຄແນນນີ້ຈະໄດ້ຂຶ້ນຢູ່ກັບທ່ານຫົວໜ້າໝວດ ຄຣູປະຈຳຊັ້ນ ແລະຜູ້ອຳນວຍການຝຶກສອນ. ການອັດພິມນີ້ ໃຫ້ເຮັດອາທິດລະເທື່ອ.

## ຄຳແນະນຳໃນການຕັດສິນໃຫ້ຄແນນ

ອັນດັບຄແນນທີ່ຂຽນໄວ້ໃນແບບການອັດພິມເປັນ ກ. ຂ. ຄ. ງ. ຈ. ນັ້ນໝາຍຄວາມວ່າ.

໑. ຄົນທີ່ໄດ້ຮັບຄແນນໝາຍຕົວ ກ ຄືບຸກຄົນທີ່ຂ້າພະເຈົ້າໄດ້ພິຈາຣະນາ ແລະຕັດສິນໂດຍຣອບຄອບຖີ່ຖ້ວນແລ້ວວ່າ ເປັນບຸກຄົນທີ່ປະຕິບັດການສອນໄດ້ດີເລີດ ດັ່ງນັ້ນຂ້າພະເຈົ້າຈຶ່ງມີຄວາມເຫັນວ່າ.

ກ– ເຂົາຈະຕ້ອງໄດ້ຮັບຄວາມສຳເຣັດໃນອາຊີບຄຣູຢ່າງດີ.

ຂ– ສົມຄວນຈະໄດ້ຮັບການສນັບສນູນພິເສດໃຫ້ໄດ້ຮຽນສູງຂຶ້ນໄປ

໒. ຄົນທີ່ໄດ້ຮັບຄແນນໝາຍຕົວ ຂ. ຄືບຸກຄົນທີ່ຂ້າພະເຈົ້າໄດ້ພິຈາຣະນາ ແລະຕັດສິນໂດຍຣອບຄອບຖີ່ຖ້ວນແລ້ວວ່າ ເປັນບຸກຄົນທີ່ປະຕິບັດການສອນໄດ້ດີດັ່ງນັ້ນວ່າ ຂ້າພະເຈົ້າຈຶ່ງມີຄວາມເຫັນວ່າ.

໑– ເຂົາຄົງໄດ້ຮັບຄວາມສຳເຣັດໃນການສອນ ເມື່ອອອກໄປປະກອບອາຊີບຄຣູ.

໒– ສົມຄວນຈະໄດ້ຮັບການສນັບສນູນຮຽນສູງໄດ້.

໓ ຄົນທີ່ໄດ້ຮັບຄແນນໝາຍຕົວ ຄ. ຄືບຸກຄົນທີ່ຂ້າພະເຈົ້າພິຈາຣະນາ ແລະຕັດສິນໂດຍຖີ່ຖ້ວນແລ້ວວ່າ ມີຄວາມສາມາດ ທີ່ພໍຈະອອກໄປ



ປະກອບອາຊີບຄຣູໄດ້ ດັ່ງນັ້ນຂ້າພະເຈົ້າມີຄວາມເຫັນວ່າ.

ກ– ເຂົາຄົງຈະໄດ້ຮັບຄວາມສຳເຣັດອາຊີບຄຣູພໍປານກາງ.

ຂ– ສົມຄວນຈະໄດ້ຮັບຄຳແນະນຳຈາກຜູ້ອຳນວຍການຝຶກສອນ .

໔ ຄົນທີ່ ໄດ້ຮັບຄະແນນໝາຍຕົວ ງ. ຄືບຸກຄົນທີ່ຂ້າພະເຈົ້າພິຈາຣະນາ ແລະຕັດສິນໂດຍຣອບຄອບຖີ່ຖ້ວນແລ້ວວ່າ ມີຄວາມສາມາດໃນການສອນບໍ່ເໝາະສົມທີ່ຈະອອກປະກອບອາຊີບຄຣູ ດັ່ງນັ້ນຂ້າພະເຈົ້າມີຄວາມເຫັນວ່າ.

ກ– ເຂົາຈະບໍ່ໄດ້ຮັບຄວາມສຳເຣັຈໃນອາຊີບຄຣູເລີຍ.

ຂ– ຄວນຈະອອກທຳການຝຶກສອນອີກຄັ້ງນຶ່ງ.

໕. ຄົນທີ່ໄດ້ຮັບຄແນນໝາຍຕົວ ຈ. ຄືບຸກຄົນທີ່ຂ້າພະເຈົ້າພິຈາຣະນາ ແລະຕັດສິນໂດຍຣອບຄອບຖີ່ຖ້ວນຮ່ວມກັບອາຈານຝຶກສອນ ຜູ້ອຳນວຍການຝຶກສອນແລ້ວວ່າ ເປັນບຸກຄົນທີ່ບໍ່ມີຄຸນສົມບັດທີ່ຈະເປັນຄຣູໄດ້ເລີຍ ກ່າວຄືຖືກສັ່ງໃຫ້ພັກການຝຶກສອນກ່ອນສິ້ນຣະຍະເວລາທຳການສອນ.

## ໜ້າທີ່ຂອງທ່ານເວລາອອກຝຶກສອນ

ວິທຍາລັຍຄູ ໄດ້ສົ່ງທ່ານອອກມາຝຶກຫັດສອນດັ່ງນີ້ກໍ ເພື່ອວັດຖຸປະສົງປາກສ້າງຕົວທ່ານໃຫ້ເປັນຄູດີ ເປັນຜູ້ນຳທີ່ດີຊຶ່ງປະກອບໄປດ້ວຍຄວາມຊຳນິຊຳນານຂັ້ນພື້ນຖານ ໃນການຮຽນການສອນຄວາມສາມາດດຳຣົງຊີວິດຄູໄດ້ສະດວກລ່ຽນໄຫລແລະສງ່າຜ່າເຜີຍດີ.

ເພື່ອຈະບັນລຸຈຸດປະສົງດັ່ງກ່າວນີ້ ທ່ານເປັນຕົວຈັກສຳຄັນ ຈະເປັນຜູ້ດັ້ນຣົນຂົນຂວາຍຊອກຫາເຮັດຫາທຳ ໃນອັນທີ່ຈະກໍ່ໃຫ້ເກີດຄວາມຊຳນິຊຳນານ ຄວາມສາມາດ ຄວາມສລຽວສລາດ ໃນການປະຕິບັດໜ້າທີ່ຄູໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.

ກິຈການທີ່ສເນີແນະນຳມານີ້ຈະສ້າງໃຫ້ທ່ານເປັນຄູທີ່ດີຕາມສົມຄວນ.

**໑.- ການປັບປຸງການຮຽນການສອນ :** ວຽກນີ້ຖືວ່າເປັນຫົວໃຈຂອງການປະຕິບັດງານຂອງນັກຮຽນຄູ, ດັ່ງນັ້ນ ເວລາສ່ວນໃຫຍ່ ຈຶ່ງຢູ່ໃນໂຮງຮຽນນັກຮຽນຝຶກສອນ ແລະຄູປະຈຳຊັ້ນ ວາງແຜນການຮຽນການສອນຮ່ວມກັນ ເພື່ອວິທີສອນແລະກິຈ–ກັມເປັນປໂຍດໃນການຮຽນ.

ເຊັ່ນ : ການສອນແບບສູນສົນໃຈ ໃຫ້ເດັກໄດ້ມີໂອກາດຄົ້ນຄວ້າການສອນ ໂດຍໃຊ້ປະສົບການຂອງເດັກເປັນພື້ນຖານ ການເຊື້ອເຊີນວິທຍາກອນມາເວົ້າລົມກັບນັກຮຽນ.

**໒.- ການຈັດຕົບແຕ່ງຫ້ອງຮຽນໃຫ້ເຫມາະສົມກັບວິຊາຮຽນສູນສົນໃຈ** ເດັກນັກຮຽນໃຊ້ຊີວິດໃນໂຮງຮຽນ ອັນນຶ່ງຫງບໍ່ຕ່ຳກວ່າ ໖ ຊົ່ວໂມງ, ການຈັດຫ້ອງຮຽນໃຫ້ສະອາດຈົບງາມເປັນບ່ອນຢູ່ນ່າອາສັຍ ຈະເປັນເຄື່ອງຊ່ອຍໃຫ້ເດັກມີນ້ຳ



ໃຈຮ່ຳຮຽນຍິ່ງຂຶ້ນ ນອກຈາກນີ້ຄູ ແລະເດັກລອນຊ່ອຍກັນເຮັດບ່ອນປະສົບການຂອງເດັກໄວ້ ເຊັ່ນ ບ່ອນມ້ຽນອຸປກອນການສອນບ່ອນສະແດງການບາງວິຊາ ໃຫ້ເດັກມີສ່ວນກ່ຽວຂ້ອງກັບບົດຮຽນຫລາຍທີ່ສຸດ ໃນວິຊາຄູບອກວ່າ **"ຄູສອນທີ່ດີຍ່ອມອະທິບາຍນ້ອຍ ສະແດງອອກໃຫ້ເຫັນຫລາຍ ແລະສາມາດຈັດໃຫ້ເດັກມີປະສົບການໄດ້ຢ່າງຍອດຢ້ຽມ"**

**໓.- ການໃຊ້ແຫລ່ງວິຊາໃນໝູ່ບ້ານ ແລະພັສດຸທີ່ຫາໄດ້ງ່າຍໆ ມາເປັນອຸປກອນການສອນໃນຊັ້ນຕົ້ນ.** ໃນຊຸມນຸມຈົນບາງສະຖານທີ່ກ່ຽວກັບປວັດສາດ ສາສນາຕາມສົມຄວນ ການນຳເດັກອອກສັງເກດຕາມສະຖານທີ່ດັ່ງກ່າວນີ້ ຈະຊ່ອຍໃຫ້ເດັກໄດ້ມີຄວາມສົນໃຈ ແລະເຂົ້າໃຈໃນບົດຮຽນຍິ່ງຂຶ້ນ. ນອກຈາກນີ້ ໃນໝູ່ບ້ານຍັງມີວິທຍາກອນບຸກຄົນທີ່ສາມາດຊ່ອຍອາທິບາຍເຣື່ອງຣາວ ສະເພາະເດັກກຳລັງຮຽນຢູ່ເຊັ່ນໝໍທີ່ພໍ່ບ້ານ ຕາແສງ ແລະຜູ້ມີປະສົບການຫລາຍໃນວິຊາອື່ນໆ. ທາງໂຮງຮຽນອາດຫາຊ່ອງທາງ ເຊີນເອົາບຸກຄົນເຫລົ່ານີ້ມາອະທິບາຍໃຫ້ເດັກຟັງເປັນບາງຄັ້ງກໍໄດ້.

ນອກຈາກນີ້ ຄວນຫາພັສດຸທີ່ຫາໄດ້ງ່າຍໆ ແລະຢູ່ໃນຣາຄາທີ່ຖືກໆມາເຮັດເປັນອຸປກອນການສອນ ແລະບາງທ້ອງຖິ່ນ ເດັກອາດສາມາດຫາມາຣົບໂຮມກັນໄວ້ໃນຫ້ອງຮຽນ ເພື່ອປະກອບການສອນສເນີ ສິ່ງດັ່ງກ່າວມານີ້ ຈະເປັນປໂຍດໃນການສິດສອນຂອງຄູທີ່ດີ

ທີ່ສຸດ.

## ໔. ວຽກທີ່ກ່ຽວກັບໂຮງຮຽນ ແລະບໍລິເວນ

ໂຮງຮຽນ: ໄດ້ແກ່ການຈັດຫາສິ່ງຂອງ ທີ່ຍັງຂາດເຂີນໃນໂຮງຮຽນປະຖົມ.

໔.- ຫ້ອງອ່ານໜັງສືເດັກນ້ອຍ: ຫ້ອງອ່ານໜັງສືເດັກນ້ອຍສຳລັບນັກຮຽນເປັນສິ່ງຈຳເປັນທີ່ສຸດ ເພາະມັນເປັນບ່ອນສະສົມຄວາມຮູ້ ຊຶ່ງເດັກອາດຫາໂອກາດເຂົ້າຄົ້ນຄວ້າອ່ານດ້ວຍຕົນເອງ ແລະກໍໃຫ້ມີນິສັຍມັກອ່ານອີກດ້ວຍ ໃຫ້ຄິດສເມີວ່າ ເດັກຈະສົນໃຈ ແລະຮັກການອ່ານ ກໍຕໍ່ເມື່ອເຂົາໄດ້ມີໂອກາດອ່ານຢູ່ເລື້ອຍໆ. ນອກຈາກນີ້ ຫ້ອງອ່ານໜັງສືຍັງມີປໂຍດອະເນກປະການ.

໕.- ຫ້ອງພິພິທພັນ: ເປັນການຫັດໃຫ້ເດັກຮູ້ຈັກສະສົມຊັພຍາກອນທັມມະຊາດ ແລະສິ່ງຂອງທີ່ມີຄຸນຄ່າໃນການສຶກສາຮ່ຳຮຽນ ໂຮງຮຽນແຫ່ງນຶ່ງ ຄວນມີຫ້ອງນຶ່ງ ຫລືສ່ວນນຶ່ງຂອງອາຄານ ຈັດເປັນບ່ອນສະສົມດັ່ງກ່າວນີ້. ວິທີປະຕິບັດນັ້ນຄື ຄູແລະນັກຮຽນຊ່ວຍກັນເກັບກຳນຳເທື່ອລະເລັກລະນ້ອຍເຊັ່ນ ຫີນຊະນິດຕ່າງໆ ຈຳພວກສັດ ຈຳພວກແມງໄມ້ ຈຳພວກຫອຍ ພືດພັນຕ່າງໆ ຕລອດຮອດສິ່ງຂອງທີ່ມີຄ່າ ພຣະພຸທຮູບ ແລະເຄື່ອງຂອງຕ່າງໆທີ່ເກົ່າແກ່ມາສະສົມໄວ້ ( ຖ້າຂາດເຂີນຫ້ອງ ກໍຄວນເກັບຮັກສາໄວ້ໃນຫ້ອງອ່ານໜັງສືກໍໄດ້ ).

໖.- ສະຖານທີ່ບ່ອນປະຖົມພຍາບານ: ຖ້າມີສະຖານທີ່ພຽງພໍ ຄວນຈັດເຮັດໄວ້ບ່ອນນຶ່ງ ໄວ້ຮັບເດັກເຈັບປ່ວຍ ຊາມ



ຊາເອີ້ນຜູ້ປົກຄອງມາແລະສົ່ງໂຮງພຍາບານຫລວງ ນອກຈາກນີ້ ອາດໃຊ້ເປັນຫ້ອງສອນສຸຂສຶກສາ ແລະໃຊ້ເປັນບ່ອນຊັ່ງນ້ຳໜັກເດັກ ແທກລວງສູງຕໍ່ໄປ.

໗.- ບ່ອນນ້ຳກິນແລະນ້ຳໃຊ້: ເຄື່ອງໂຮງຮຽນເປັນຕົວຢ່າງທີ່ດີແກ່ຊາວບ້ານຄວນໃຫ້ມີນ້ຳກິນ ແລະນ້ຳໃຊ້ທີ່ມີຝາປິດແໜ້ນຖືກສຸຂພາບສເມີ. ເປັນການຝຶກຫັດໃຫ້ເດັກຮູ້ຈັກໃຊ້ນ້ຳທີ່ສະອາດ ກິນນ້ຳທີ່ສະອາດ ແລະການຕຣອງນ້ຳ ການຕົ້ມນ້ຳກິນ ລວມທັງການບົວຣະບັດຮັກສາດ້ວຍ.

໘.- ໃຫ້ມີສ້ວມຖ່າຍ: ສ້ວມຖ່າຍເປັນສິ່ງຈຳເປັນ ແກ່ສັງຄົມທີ່ມີສະມາຊິກຫລາຍ ເຊັ່ນໂຮງຮຽນເປັນຕົ້ນ. ໂຮງຮຽນຄວນຈັດໄວ້ໃຫ້ມີພຽງພໍ ຖືກສຸຂພາບ ສະອາດທີ່ສຸດ ສ້ວມຖ່າຍນີ້ຄວນເຮັດເພາະສົມກັບສະພາບບ້ານເມືອງ ບ່ອນນ້ຳສະອາດກໍຄວນເຮັດອິດຊຶມ ບ່ອນຂາດນ້ຳກໍຄວນເຮັດອິດທັມມະດາ ແຕ່ໃຫ້ມີຝາປິດແໜ້ນໜາດີ.

໙.- ບ່ອນກິນເຂົ້າຂອງເດັກທີ່ມາຈາກບ້ານໄກ: ໂຮງຮຽນທີ່ມີເດັກນ້ອຍມາຈາກບ້ານອື່ນ ແລະມາກິນເຂົ້າຢູ່ກັບໂຮງຮຽນ ຄວນຈະມີທີ່ຮັບປະທານອາຫານຖືກສຸຂພິບານສເມີ. ນອກຈາກນີ້ ຍັງເປັນບ່ອນຊຸມແຊວຂອງເດັກແລະຄູອີກ ຄູແລະນັກຮຽນຄວນຈະມີການຈັດອາຫານຮ່ວມກັນເດືອນລະນຶ່ງຄັ້ງ ເພື່ອເປັນໂອກາດໃຫ້ເດັກໄດ້ຝຶກຫັດກິນເຂົ້າຖືກສຸຂພາບ ແລະມີມາຣະຍາດທີ່ດີດ້ວຍ ເຊັ່ນ ລ້າງມືກ່ອນແລະລຸນຮັບປະທານ ເຂົາເປັນການສ້າງຄວາມສາມັກຄີຣະຫວ່າງເດັກແລະຄູ ບາງຄັ້ງອາດເຊີນຜູ້ປົກຄອງມາຮ່ວມນຳຍິ່ງດີຫລາຍ.

## ໑໐.- ບ່ອນຫລິ້ນຂອງເດັກນ້ອຍ:

ການສ້າງສະຖານທີ່ບ່ອນຫລິ້ນໃຫ້ເດັກນ້ອຍໄດ້ມີໂອກາດແລ່ນຫລິ້ນ ອອກກຳລັງກາຍ ຫລິ້ນເປັນໝູ່ ຕາມທັມມະຊາດຂອງເດັກ ເປັນການສົ່ງເສີມຄວາມງອກງາມ ແລະເປັນການພັທນາທາງຮ່າງກາຍ ອາຣົມ ແລະສັງຄົມ ໃຫ້ຈເຣີນຂຶ້ນໃນຕົວເດັກ ເດັກຈະຮູ້ຫລິ້ນນຳກັນ ບໍ່ເອົາປຽບກັນ ສິ່ງນີ້ ຈະຊ່ວຍປູກຝັງອຸປນິສັຍອັນດີເລີດແກ່ຕົວເດັກ ໂຮງຮຽນຄວນຊ່ວຍຈັດຫາບ່ອນນັ່ງຕາມເດີ່ນໂຮງຮຽນ ເປັນບ່ອນພັກຜ່ອນຢ່ອນອາຣົມຂອງເຂົາ ເຊັ່ນ ເຮັດມ້ານັ່ງຫລິ້ນ ໂອນຊາ ບ່ອນເຕັ້ນບ່ອນແລ່ນ ເປັນຕົ້ນ.

## ໑໑.- ການບົວຣະບັດຮັກສາເດີ່ນໂຮງຮຽນແລະບໍຣິເວນອ້ອມແອ້ມເດີ່ນໂຮງຮຽນ:

ເດີ່ນໂຮງຮຽນທີ່ສະອາດແລະຮຽບຮ້ອຍ ປະດັບປະດາດອກໄມ້ ໄມ້ປະດັບ ແລະຕົ້ນໄມ້ໃຫ້ໝາກ ຈະຊ່ວຍປູກຝັງນິສັຍອັນດີແກ່ເດັກ ນອກຈາກນີ້ ຍັງເປັນທີ່ສະດຸດຕາແກ່ຄົນອື່ນທີ່ເຂົ້າມາຢ້ຽມຢາມໂຮງຮຽນອີກດ້ວຍແລະເປັນຕົວຢ່າງທີ່ດີແກ່ບ້ານເມືອງ.

## ໑໒.- ວຽກກ່ຽວກັບການປູກຝັງ ແລະລ້ຽງສັດ:

ປະເທດລາວເປັນປະເທດກະສິກັມ ປະຊາກອນຄົນລາວທຳມາຫາກິນລ້ຽງຊີບດ້ວຍການຜລິດດ້ານກະສິກັມ ຫລາຍກວ່າດ້ານອຸດສາຫະກັມ ແລະອີກປະການນຶ່ງ ຫລັກສູດການສຶກສາແຫ່ງຊາດ ກໍໄດ້ເນັ້ນໜັກດ້ານກະສິກັມຢູ່ແລ້ວ ໂຮງຮຽນຈຶ່ງເປັນບ່ອນທຳອິດ ທີ່ມີພາຣະໜ້າທີ່ຝຶກແອບເດັກໃຫ້ຮູ້ຈັກປູກຝັງ ແລະລ້ຽງສັດໃຫ້ພ້ອມໆກັນ ເຊັ່ນ: ຮູ້ຈັກເລືອກແນວຜັກ, ໝາກໄມ້ທີ່ດີ ເລືອກພັນສັດທີ່ດີ



ຮູ້ຈັກການຂຸດຄົ້ນດິນ ການເຮັດຄອກສັດ ການບົວຣະບັດຮັກສາ ການໃສ່ຝຸ່ນ ການໃຫ້ອາຫານສັດ ຕຣອດຮອດການປ້ອງກັນພັຍອັນຕະຣາຍຕ່າງໆຂອງເຄື່ອງປູກແລະສັດລ້ຽງ. ການປູກຝັງແລະລ້ຽງສັດໃນໂຮງຮຽນ ບໍ່ແມ່ນເພື່ອການຄ້າ ແຕ່ເພື່ອການຄົ້ນຄວ້າແລະການຮຽນຮູ້ວິທີການຕ່າງໆ.

**ຕົວຢ່າງ:** ໂຮງຮຽນແຫ່ງນຶ່ງມີນັກຮຽນປະມານ ໕໐ ຄົນໃຫ້ລ້ຽງໄກ່ລາ ໗ ໂຕ ຜູ້ ໑ ແມ່ ໖. ໃຫ້ລ້ຽງໝູ ໔ ຫລື ໑ ໂຕ. ປູກຜັກຈັກ ໑໐ ໜານ. ສິ່ງຂອງເຫລົ່ານີ້ໃຫ້ເປັນສົມບັດຂອງນັກຮຽນເພື່ອປໂຍດຂອງເດັກ ໃຫ້ເດັກຜັດປ່ຽນກັນບົວຣະບັດຮັກສາທຸກໆວັນ ນອກຈາກນີ້ ໂຮງຮຽນຄວນຈັດບ່ອນນຶ່ງໄວ້ສຳລັບກ້າແກ່ນຜັກ ໝາກໄມ້ ດອກໄມ້ ຕົ້ນໄມ້ທີ່ພາໃຫ້ໝາກຖ້ານີ້ຫລາຍ ກໍແຈກຢາຍຂາຍໃຫ້ຊາວບ້ານໄປແຜ່ພັນໃຫ້ກວ້າງຂວາງອອກເທັນວ່າ ເປັນປໂຍດທີ່ສຸດ.

# ການປະຕິບັດຕົນຂອງນັກຣຽນຝຶກສອນ

## ໑.- ໜ້າທີ່ຂອງການສອນໃນຊັ້ນຮຽນ :

ນັກຣຽນຝຶກສອນ ເມື່ອເຂົ້າປະຕິບັດການສອນໃນຊັ້ນແລ້ວກໍກາຍເປັນຄຣູປະຈຳຊັ້ນໄປຜູ້ນຶ່ງ ຈຶ່ງມີສິ່ງທີ່ຕ້ອງປະຕິບັດເໝືອນແທ້ໆ ດັ່ງນີ້ ;

**ກ. ການແຕ່ງກາຍ.** ນັກຣຽນຝຶກສອນ ໃຫ້ແຕ່ງກາຍຣຽບຣ້ອຍ ຄຣູປະຈຳໃນໂຮງຮຽນແຕ່ງເຄື່ອງແບບຂ້າຊການ ນັກຣຽນຝຶກສອນກໍຕ້ອງແຕ່ງເຄື່ອງແບບນັກຣຽນຄຣູ ທີ່ທາງວິທຍາລັຍຄຣູໄດ້ກຳນົດໃຫ້ແລ້ວ.

**ຂ. ການເວົ້າຈາ.** ຄວນໃຊ້ສຳນຽງສຸພາບ ບໍ່ເວົ້າໄວຫລືຊ້າເກີນໄປ.

**ຄ. ການໃຊ້ພາສາ.** ໃຫ້ເປັນພາສາທີ່ສຸພາບ ໃຊ້ໄວຍາກອນຖືກຕ້ອງ ບໍ່ໃຊ້ພາສາດ່າວ່າຫຍາບຄາຍ.

**ງ. ການຕຽມການສອນ.** ວຽກສຳຄັນຂອງນັກຣຽນຄຣູແມ່ນການຕຽມການສອນ ນັກຣຽນຝຶກສອນຈະຕຽມໃຫ້ລະອຽດດີ ໃຫ້ສົມບູນທັງອຸປກອນແລະເນື້ອສອນ ຖ້າເກີດມີການຂັດຂ້ອງໃຫ້ຮີບປຶກສານຳຄຣູປະຈຳຊັ້ນ ຫລືທ່ານຫົວໜ້າໂຮງຮຽນ ໃນວັນທຳອິດ ນັກຣຽນອາດຈະຕຽມໄວ້ວັນນຶ່ງໆກ່ອນ ເມື່ອໄດ້ຄວາມຊຳນານດີແລ້ວ ຈຶ່ງຕຽມເປັນຫລາຍໆວັນ ແລະເປັນໂຄງການສອນຣະຍະຍາວຕໍ່ໄປ.



**ຈ. ການໃຊ້ແຫລ່ງວິທຍາການ.** ນັກຣຽນຝຶກສອນຄວນຈະຮູ້ ແຫລ່ງວິທຍາການ ເຊັ່ນ ໂຮງສີ ສະຖານີລ້ຽງປາ ສະຖານທີ່ບູຮານວັດຖຸ ແລະແຫ່ງອື່ນ ເພື່ອຈະພາເດັກໄປເບິ່ງຕາມໂອກາດ. ນອກຈາກນີ້ ນັກຣຽນຝຶກສອນອາດຈະຫາຮູບພາບ ຮູບຖ່າຍ ຫລືອື່ນໆທີ່ຈະຊ່ວຍໃຫ້ເດັກໄດ້ຮັບຄວາມມ່ວນຊື່ນໃນການຮຽນ ໂດຍຂໍຢືມຈາກອົງການອື່ນໆກໍໄດ້.

**ສ. ການຕຽມວຽກຂອງວັນຕໍ່ໄປ.** ກ່ອນນັກຣຽນຈະກັບເຮືອນພັກໃນວັນທຳອິດ ນັກຣຽນຕ້ອງສອບຖາມນຳຄຣູປະຈຳຊັ້ນ ແລະຄຣູຫົວໜ້າວ່າ ຕົນຈະມີວຽກເຮັດໃນວັນຕໍ່ໄປອັນໃດແດ່ ເພື່ອຈະໄດ້ກະຕຽມໄວ້ໃຫ້ຣຽບຣ້ອຍ ວັນທຳອິດອາດຈະມີບັນຫາແລະຂໍ້ຫຍຸ້ງຍາກເປັນຂອງທັມມະດາ ຂໍ້ຫຍຸ້ງຍາກເຫລົ່ານີ້ຈະຄ່ອຍໝົດໄປ ເມື່ອໄດ້ເຮັດວຽກຈົນໄດ້ຮັບຄວາມຊຳນານຫລາຍຂຶ້ນ.

## ໒.- ການປະຕິບັດຕົນໃນໝູ່ບ້ານ:

ເຮືອນພັກຂອງນັກຣຽນຝຶກສອນ ຈະຢູ່ໃນໝູ່ບ້ານສ່ວນຫລາຍ ແລະນັກຣຽນຝຶກສອນກໍໃຊ້ຊີວິດການຢູ່ກິນໃນບ້ານ. ດັ່ງນັ້ນ ນັກຣຽນທັງຫລາຍຕ້ອງປະພຶດຕົນໃຫ້ສຸພາບຣຽບຣ້ອຍ ສົມກັບວ່າເປັນນັກຣຽນຄຣູ ແລະເປັນຜູ້ທີ່ຈະເຣີນດີແລ້ວ ໃຫ້ຣະນຶກສເມີວ່າ ນັກຣຽນຝຶກຫັດຍັງເປັນນັກຣຽນຢູ່ ແລະເປັນຜູ້ແທນຂອງສະຖາບັນຝຶກຫັດຄຣູນຳອີກ. ຄວນຈະຫລີກລ້ຽງເຣື່ອງອະບາຍມຸກ ອັນຈະກໍໃຫ້ຊາວບ້ານເສື່ອມຄວາມນັບຖື ແລະເພັ່ງສະຖາບັນຝຶກຫັດຄຣູໄປໃນແງ່ບໍ່ດີ.

**ກ ການຮັກສາທີ່ພັກ:** ນັກຮຽນຄົງຮູ້ແລ້ວວ່າ ການອອກຝຶກຫັດສອນຂອງນັກຮຽນດັ່ງນີ້ ນັກຮຽນນຳເອົາວຽກມາປະຕິບັດ ໒ ຢ່າງຄື :

໑. ແມ່ນວຽກກ່ຽວກັບການຮຽນ ການສອນ ແລະການບູຣະນະໂຮງຮຽນແຕ່ງນັ້ນໃຫ້ມີສງ່າຣາສີເພີ່ມຂຶ້ນເລື້ອຍໆ.

໒. ນັກຮຽນມາແອບຫັດຢູ່ກິນເປັນແບບຢ່າງແກ່ຊາວບ້ານ ເຊັ່ນ ຈັດເຮືອນພັກເຊົາໃຫ້ເປັນຕົວຢ່າງ ເຣື່ອງນີ້ສຳຄັນທີ່ສຸດເພາະນັກຮຽນຝຶກສອນບໍ່ແມ່ນເປັນເຈົ້າໜ້າທີ່ ເພື່ອຢ່າງເລາະລຽບບອກກ່າວຊາວບ້ານໃຫ້ທຳຄວາມສະອາດ ແຕ່ນັກຮຽນຕ້ອງເຮັດຂຶ້ນກ່ອນ ເພື່ອໃຫ້ຊາວບ້ານເປັນຜູ້ຍອມຮັບນັບຖືປະຕິບັດຕາມ. ດັ່ງນັ້ນ ເຮືອນພັກຂອງນັກຮຽນຕ້ອງເປັນຕົວຢ່າງທີ່ດີທີ່ສຸດໃຫ້ຊາວບ້ານ ເຊັ່ນກ້ອງຕະລ່າງສະອາດມີສ້ວມຖ່າຍທີ່ຖືກສຸຂອະນາມັຍ ມີບ່ອນຖິ້ມຂີ້ເຫຍື້ອ ມີສວນດອກໄມ້ ໄຫນ້ຳທີ່ມີຝາປິດແໜ້ນມີບ່ອນເກັບເຄື່ອງແລະພື້ນເຮືອນສະອາດ ເຮືອນຄົວສະອາດ ມ້ຽນມັດສິ່ງຂອງໃຫ້ເປັນຣະບຽບເປັນຕົ້ນ.

ການເຮັດດັ່ງນີ້ເພື່ອຊັກຈູງ ໃຫ້ຊາວບ້ານເບິ່ງເປັນຕົວຢ່າງ. ນອກຈາກນີ້ ນັກຮຽນຝຶກຫັດສອນ ອາດຈະຈັດຫາໜັງສືແລະວາຣະສານໃຫ້ໄທບ້ານແລະເດັກໄດ້ອ່ານ.



**ຂ. ການແບ່ງເວລາເຮັດວຽກ:** ໃນຣະຍະການຝຶກສອນຂອງນັກຮຽນ ນັກຮຽນມີວຽກທີ່ຈະຕ້ອງປະຕິບັດຢູ່ ໒ ຢ່າງຄື: ວຽກຂອງໂຮງຮຽນ ແລະວຽກທີ່ກ່ຽວກັບການພັທນາໝູ່ບ້ານ. ດັ່ງນັ້ນ ການແບ່ງເວລາເຮັດວຽກຂອງນັກຮຽນຈຶ່ງເປັນສິ່ງສຳຄັນ ຖ້າເອົາເວລາທັງໝົດໄປເຮັດວຽກໃນໂຮງຮຽນ ວຽກພັທນາທີ່ພັກພາອາສັຍຂອງຄຣູ ແລະວຽກໝູ່ບ້ານກໍຈະຂາດເຂີນ ເວລາສ່ວນໃຫຍ່ຄວນໄດ້ແບ່ງໃຫ້ສົມດູນກັນ ເຊັ່ນ ໃຊ້ເວລາ ໓/໔ ປະຕິບັດງານໃນໂຮງຮຽນ ແລະທີ່ເຫລືອໃຫ້ປະຕິບັດງານໃນບ້ານ ດັ່ງຂໍ້ແນະນຳຕໍ່ໄປນີ້ ;

໑. ໃນອາທິດສັງເກດນັ້ນ ນອກຈາກສັງເກດການສອນຂອງຄຣູໃນຫ້ອງຮຽນແລ້ວ ນັກຮຽນຍັງຕ້ອງຊ່ວຍເຫລືອຄຣູໃນການເຮັດວຽກຕ່າງໆອີກ ເຊັ່ນເອີ້ນຊື່ນັກຮຽນ ລຽນແຖວ ເຂົ້າຫ້ອງ ແລະເລີກເມືອ ຊ່ວຍວຽກຕ່າງໆທີ່ມີໃນຊັ້ນຮຽນ ແຕ່ນັກຮຽນບໍ່ທັນໄດ້ສອນເທື່ອ ຮອດອາທິດທີສອງນັກຮຽນຄຣູ ຄວນຈະເລີ່ມສອນໄດ້ແລ້ວ ໃນບາງວິຊາທີ່ເຫັນວ່າສອນໄດ້ດີ. ໃນອາທິດນີ້ຄຣູແລະນັກຮຽນຝຶກສອນຄວນຈະຕ້ອງຕົກລົງກັນວ່າ ໃຜຈະສອນວິຊາໃດ ໂດຍຖືເອົາພື້ນຖານຂອງນັກຮຽນຄຣູ ໝາຍຄວາມວ່າ ວິຊາໃດທີ່ນັກຮຽນເຫັນວ່າຈະສອນໄດ້ ຈຶ່ງໃຫ້ທຳການສອນ ສ່ວນວິຊາທີ່ຍັງບໍ່ທັນຮູ້ຈັກສອນນັ້ນໃຫ້ນັກຮຽນສັງເກດຄຣູປະຈຳຊັ້ນສອນໃຫ້ເບິ່ງອີກ. ສຳລັບອາທິດຕໍ່ໆໄປ ໃຫ້ນັກຮຽນຝຶກສອນທຳການສອນປະມານ ໓/໔ ຂອງວິຊາທັງໝົດເຫລືອນັ້ນຄຣູປະຈຳຊັ້ນສອນເອງ ເພື່ອນັກຮຽນຈະໄດ້ສັງເກດອີກ ວິຊາ ໑/໔ ປ່ອຍໃຫ້ຄຣູປະຈຳຊັ້ນສອນເອງນີ້ ໃຫ້ເປັນວິຊາທີ່ນັກຮຽນຝຶກຫັດສອນເຫັນວ່າ ບໍ່ທັນຊຳນານດີ ແຕ່ເປັນບາງນັກຮຽນຝຶກສອນຈະຕ້ອງຮ້ອງຂໍສອນຕລອດວັນເພື່ອຈະທົດລອງວ່າ

ນັກຮຽນຈະສອນຜູ້ນຶ່ງໃຫ້ໄດ້ສອນປະມານ ໑/໓ ຂອງວັນຝຶກສອນທັງໝົດ ເຊັ່ນ ໃນຣະຍະການຝຶກສອນມີວັນຈະສອນທັງໝົດ ໔໕ ວັນ ນັກຮຽນຈະຕ້ອງໄດ້ສອນຕລອດວັນຢ່າງນ້ອຍ ໑໕ ວັນ.

ວັນເສົາ ວັນອາທິດ ຫລືວັນຣາຊການເປັນວັນພັກຜ່ອນ ແຕ່ຖ້າຫາກໂຮງຮຽນແລະໝູ່ບ້ານມີກິຈການງານ ນັກຮຽນຝຶກສອນຕ້ອງໄດ້ເຂົ້າຊ່ວຍເຫລືອ.

ສະຖາບັນຝຶກຫັດຄຣູ ເປີດແລະປິດພາກຮຽນ ບໍ່ຄ່ອຍຖືກກັນກັບວັນເປີດແລະປິດໂຮງຮຽນປະຖົມ ຖ້ານັກຮຽນຝຶກສອນຢູ່ໃນໝູ່ບ້ານໃນຣະຍະປິດພາກຮຽນຂອງໂຮງຮຽນປະຖົມ ນັກຮຽນຝຶກສອນຕ້ອງພັກແຮມຢູ່ໃນບ້ານນັ້ນສເມີ ແລະຕ້ອງໄດ້ປະຕິບັດວຽກໃນໂຮງຮຽນແລະໝູ່ບ້ານຢ່າງນ້ອຍວັນລະ ໔ ຊົ່ວໂມງ. ສ່ວນການລົ້ມຈອນໄປມານັ້ນ ໃຫ້ໄດ້ຮັບອະນຸຍາດຈາກວິທຍາລັຍຄຣູ ແລະຈາກຫົວໜ້າໂຮງຮຽນເສັຽກ່ອນ.

## ຄ. ການກວດສອບຕົນເອງ:

ນັກຮຽນຝຶກສອນຈະຕ້ອງໄດ້ກວດຜົນງານຂອງຕົນເອງ ວ່າໄດ້ເຮັດອັນໃດໄປແລ້ວແລະໄດ້ຜົນປານໃດ ເພື່ອເປັນເຄື່ອງຊ່ວຍໃຫ້ປະຕິບັດງານຕໍ່ໄປຂ້າງໜ້າໄດ້ດີຍິ່ງຂຶ້ນ. (ແບບກວດຜົນດ້ວຍຕົນເອງ ໄດ້ວາງໄວ້ຕໍ່ທ້າຍພັບນີ້ ).

## ງ. ການປັບປຸງຕົນເອງຢູ່ສເມີ:

ເຖິງວ່າ ນັກຮຽນຝຶກສອນຈະໄດ້ສຶກສາຫລັກວິຊາການຕ່າງໆມາແລ້ວກໍຕາມ ຈໍາເປັນຕ້ອງຊອກສແວງຫາຄວາມຮູ້ແລະປະສົບການເພີ້ມເຕີມຢູ່ສເມີ ເພາະແນວຄວາມຄິດໃໝ່ໆ ທັງໃນດ້ານການຮຽນການສອນມີຜູ້ຄົ້ນຄິດຂຶ້ນມາຢູ່ສເມີ. ການອ່ານຕໍາຣາໃໝ່ໆ ການອ່ານວາຣະສານສຶກສາ ເຊັ່ນ



ໜັງສືພິມສຶກສາທິການ ວາຣະສານຄຣູເປັນຕົ້ນ. ສຶກສາເພີ່ມເຕີມໃນຂັ້ນສູງ ຕໍ່ໄປຈະເຮັດໃຫ້ຮູ້ເຖິງແນວປະຕິບັດ ແລະແນວຄວາມຄິດໃໝ່ໆ ຊຶ່ງຈະເຮັດໃຫ້ເປັນຄຣູໄດ້ດີຍິ່ງຂຶ້ນທຸກໆວັນແລະທຸກໆປີ.

## ຈ. ເມື່ອການຝຶກຫັດສອນສິ້ນສຸດລົງ.

ນັກຮຽນຝຶກຫັດໄດ້ປະຕິບັດງານມາໄດ້ໄຕຣມາດນຶ່ງແລ້ວ ໄດ້ສອນໃນໂຮງຮຽນ ແລະໄດ້ເຮັດວຽກຮ່ວມກັບຄຣູ ແລະຊາວບ້ານ ກ່ອນຈະກັບເຂົ້າສູ່ວິທຍາລັຍຄຣູ ນັກຮຽນຕອບຕັ້ງຄໍາຖາມໂຕເອງວ່າ " ດຽວນີ້ຂ້ອຍມີຄຸນສົມບັດໃນການທີ່ຈະເປັນຄຣູທີ່ດີຂຶ້ນຫລືບໍ່ ?

໑. ເຂົ້າໃຈເຣື່ອງພັທນາການດີຂຶ້ນກວ່າເກົ່າບໍ່ ?

໒. ໄດ້ຮັບຄວາມຮູ້ແລະປະສົບການໃນການເປັນຄຣູເພີ້ມຂຶ້ນຫລືບໍ່ ?.

໓. ເຂົ້າທິສດີການຮຽນ ແລະການສອນດີຂຶ້ນບໍ່ ?

໔. ໄດ້ໃຊ້ທິສດີແລະຫລັກວິຊາທີ່ໄດ້ຮຽນມາ ໄດ້ຜົນພຽງໃດ ?.

໕. ປະຕິບັດງານຈົນຄຣູ ແລະຊາວບ້ານຖືເໝືອນເປັນສະມາຊິກໃນບ້ານນັ້ນຫລືບໍ່ ?

໖. ເຮັດວຽກຮ່ວມກັບຄຣູໃນໂຮງຮຽນໄດ້ດີພຽງໃດ ?.

໗. ເດັກມີຄວາມຮັກແລະນັບຖືນ້ອຍຫລາຍປານໃດ ?

໘. ເຮັດວຽກຮ່ວມກັບຊາວບ້ານ ແລະຕົນອື່ນໆດີປານໃດ ?.

໙. ສາມາດແກ້ບັນຫາລະເພາະໜ້າໄດ້ຫລືບໍ່

໑໐. ມີທັສນະຄະຕິໃນການທີ່ຈະເປັນຄຣູທີ່ດີ ແລະຜູ້ນໍາຂອງໝູ່ບ້ານທີ່ດີມາກນ້ອຍປານໃດ ?.

## ສ. ກ່ອນເດີນທາງກັບ.

ນັກຮຽນສໍາຣວດງານທີ່ໄດ້ມອບໝາຍໃຫ້ ວຽກບາງອັນອາດຈະບໍ່ທັນແລ້ວ ເຊັ່ນ ບັນຊີເອີ້ນຊື່ ກວດ

ພັບສອນ ເຮັດຣະດັບທີ່ນັກຮຽນຣາຍງານປະຈຳເດືອນ ເປັນຕົ້ນ. ສິ່ງເຫລົ່ານີ້ ຄວນລາຍງານໃຫ້ຄູປະຈຳຊັ້ນແລະທ່ານຫົວໜ້າໝວດຮູ້ນຳ. ຕໍ່ໄປໃຫ້ສຳຣວດເຄື່ອງໃຊ້ຂອງບ້ານພັກ ວ່າມີອັນໃດເສັຽຫາຍແລະຫັກເພອັນໃດແດ່ ຖ້າມີສິ່ງຂອງທີ່ໄດ້ຢືມມາ ກໍໃຫ້ສົ່ງຮຽບຮ້ອຍສເນີ. ເມື່ອນັກຮຽນຝຶກຫັດສອນຮູ້ວ່າ ວັນກຳໜົດທີ່ຈະກັບວິທຍາລັຍ ນັກຮຽນຝຶກສອນທຸກຄົນ ຄວນຈະໄດ້ກ່າວອຳລາຄູໃນໂຮງຮຽນ ຊາວບ້ານແລະເດັກນັກຮຽນ. ສຳລັບເດັກໃນຊັ້ນຮຽນນີ້ ໃຫ້ອະທິບາຍໃຫ້ເຂົ້າໃຈ ຈະຈາກໄປອັນໃດ ເປັນຫຍັງຈຶ່ງຕ້ອງຈາກໄປ ເມື່ອຈາກໄປແລ້ວຈະເຮັດຫຍັງ ພຍາຍາມກ່າວຄຳອຳລາແກ່ຄນະຄູ ແລະຊາວບ້ານເປັນການສ່ວນຕົວ ແລະຂອບໃຈນຳຜູ້ທີ່ມີຄວາມອຸປ–ກາຣະແລະຊ່ວຍເຫລືອເປັນຢ່າງດີ.



# ແບບກວດຜົນການປະຕິບັດຂອງນັກຮຽນຄູ ໂດຍນັກຮຽນຄູເອງ

ຫ້ອງຮຽນທີ ........ ວັນທີ ........

| ລາຍການທີ່ນັກຮຽນຄວນກວດຕົວເອງ | ບໍ່ມີເລີຍ | ບາງຄັ້ງ | ເລື້ອຍໆ |
|---|---|---|---|
| –ຂ້ອຍສົ່ງເສີມຄວາມສົນໃຈ, ຄວາມສາມາດ, ຄວາມຕ້ອງການຂອງເດັກ. | | | |
| –ຂ້ອຍໃຊ້ປະສົບການຂອງເດັກ ໃນການສິດສອນ. | | | |
| –ຂ້ອຍໃຊ້ວິທີສອນແບບຕ່າງໆໄດ້ຜົນ. | | | |
| –ຂ້ອຍໄດ້ກຽມບົດຮຽນມາກ່ອນສອນ. | | | |
| –ຂ້ອຍໃຫ້ໂອກາດນັກຮຽນສະແດງອອກ. | | | |
| –ຂ້ອຍໃຊ້ອຸປກອນການສອນປະກອບການ [illegible] | | | |
| –ຂ້ອຍ ໃຊ້ຊັບພຍາກອນມາເອົາໃຫ້ສົມກັບບົດຮຽນ. | | | |
| –ຂ້ອຍ ພານັກຮຽນໄປສຶກສານອກສະຖານທີ່. | | | |
| –ຂ້ອຍສົ່ງເສີມເດັກ ໃຫ້ມີຄວາມຊຳນານດ້ານ ອ່ານ ຂຽນ ຄິດເລກ. | | | |
| –ຂ້ອຍສົ່ງເສີມເດັກໃຫ້ເຮັດວຽກດ້ວຍຕົນເອງ ຄິດຄົ້ນດ້ວຍຕົນເອງ. | | | |
| –ຂ້ອຍເປັນຄົນມີນ້ຳໃສໃຈຈິງ ໃນໜ້າທີ່ຄູ | | | |

—ຂ້ອຍໃຫ້ຄຳປຶກສາແກ່ເດັກ ເມື່ອເດັກຕ້ອງການຄວາມຊ່ວຍເຫລືອ.

—ຂ້ອຍ ມີສ່ວນຮັບຜິດຊອບໃນກິຈການງານຂອງໂຮງຮຽນ.

—ຂ້ອຍມີຄວາມສັມພັນຢ່າງດີ ກັບຄຣູທຸກໆຄົນ.

—ຂ້ອຍໄດ້ຕົກແຕ່ງຫ້ອງຮຽນເໝາະສົມກັບວິຊາຮຽນ.

—ຂ້ອຍໃຊ້ແຫລ່ງວິຊາໃນໝູ່ບ້ານ ປະກອບການຮຽນ ການສອນ.

—ຂ້ອຍໃຊ້ວັສດຸທີ່ຫາໄດ້ງ່າຍ ມາສ້າງອຸປ—ກອນ.

—ຂ້ອຍ ຊ່ວຍໃຫ້ມີສະຖານທີ່ອ່ານໜັງສືສຳລັບເດັກ.

—ຂ້ອຍຊ່ວຍສະສົມອຸປກອນໄວ້ ໃນພິພິທພັນ.

—ຂ້ອຍຊ່ວຍຈັດໃຫ້ມີນ້ຳກິນ ນ້ຳໃຊ້ໃນໂຮງຮຽນ.

—ຂ້ອຍຊ່ວຍໃຫ້ມີບ່ອນຮັບປະທານອາຫານສຳລັບເດັກບ້ານໄກ.

—ຂ້ອຍຊ່ວຍໃຫ້ເດັກມີສະຖານທີ່ຫລິ້ນແລະອຸປກອນການຫລິ້ນ.

—ຂ້ອຍ ໄດ້ຊ່ວຍບົວຣະບັດຮັກສາສະຖານຕ່າງໆໃຫ້ຈົບງາມ.

—ຂ້ອຍ ໄດ້ຊ່ວຍນັກຮຽນທຳການປູກຝັງ



ແລະລ້ຽງສັດ.

—ຂ້ອຍໄດ້ຊ່ວຍໃຫ້ມີສະຖານເພາະປູກກ້າແກ່ນ.

—ຂ້ອຍເປັນບຸກຄົນສະອາດ ສຸພາບ ຮຽບຮ້ອຍ.

—ຂ້ອຍເວົ້າຈາປາສັຍສຸພາບອ່ອນນ້ອມ.

—ຂ້ອຍຮັກສາບ້ານພັກໃຫ້ສະອາດ

—ຂ້ອຍໄດ້ ໄປຢ້ຽມ ແລະຕິດຕໍ່ຜູ້ປົກຄອງເດັກ.

—ຂ້ອຍໄດ້ເຊີນຜູ້ປົກຄອງມາຊົມວຽກຂອງໂຮງຮຽນ.

—ຂ້ອຍຮ່ວມກັບຊາວບ້ານ ພັທນາໝູ່ບ້ານ.

—ຂ້ອຍ ສະແດງເປັນຜູ້ມີຄວາມຄິດຣິເລີ່ມແລະເປັນຜູ້ນຳ.

—ຂ້ອຍໄດ້ສ້າງຄວາມເຊື່ອ ແລະຄວາມຮັກແກ່ຊາວບ້ານ.

—ຂ້ອຍ ສົ່ງເສີມການສຶກສາຜູ້ໃຫຍ່ໃນໝູ່ບ້ານ.

—ຂ້ອຍຊ່ວຍຈັດໜັງສືພິມ ແລະຂ່າວສຳລັບໝູ່ບ້ານ.

—ຂ້ອຍສົ່ງເສີມດ້ານການກິລາ ແລະການຫລິ້ນໃນໝູ່ບ້ານ.

—ຂ້ອຍສົ່ງເສີມໃຫ້ຊາວບ້ານ ເຮັດສວນຄົວ ລ້ຽງສັດ.

—ຂ້ອຍໄດ້ສແວງຫາຄວາມຮູ້ ແລະປະສົບ

ການເພີ່ມເຕີມ.

—ຂ້ອຍໄດ້ປະຕິບັດຕາມຄຳແນະນຳທາງວິທ-ຍາລັຍຄຣູໄດ້ຜົນ.

—ຂ້ອຍ ໄດ້ເຮັດວຽກຮ່ວມກັບເຈົ້າໜ້າທີ່ອື່ນໆ.

**ວິທີວັດຜົນ :** ໃຫ້ໝາຍຕີນກາໃສ່ຊ່ອງໃດຊ່ອງໜຶ່ງ ທີ່ທ່ານຕັດສິນໃຈແນ່ນອນແລ້ວວ່າ ທ່ານຄວນໄດ້ຮັບຄແນນໃນຊ່ອງນັ້ນ.



# ຂໍ້ແນະນຳກ່ຽວກັບວິຊາຄຣູ.

## ກ. ວ່າດ້ວຍການຕຽມການສອນຂອງຄຣູປະຈຳຊັ້ນ

### ໑. ການຕຽມການສອນມີປໂຍດໃຫ້ຄຣູຢ່າງໃດ?

ທ່ານ ຊາແກັສເບັຽ ນັກຂຽນທີ່ມີຊື່ກ້ອງຂອງອັງກິດ ໄດ້ກ່າວໄວ້ໃນຕອນນຶ່ງວ່າ " ການທີ່ໄດ້ກະຕຽມໄວ້ລ່ວງໜ້າ ກັບການທີ່ບໍ່ໄດ້ກະຕຽມໄວ້ລ່ວງໜ້າ ທັງສອງຢ່າງນີ້ ເປັນບັນຫາສຳລັບຄຣູ ຄຣູຫລາຍຄົນໄດ້ເວົ້າວ່າ ການຕຽມການສອນ ເປັນການສູນເສັຽເວລາຫລາຍ. ອັນນີ້ອາດເປັນຄວາມຈິງສຳລັບຄຣູທີ່ແກ່ການສອນມາແລ້ວ ທີ່ໄດ້ມີປະສົບການດ້ານການສອນມາຢ່າງເຕັມປ່ຽມແລ້ວການກະຕຽມການສອນຂອງເຂົາອາດຈະໜ້ອຍລົງເທົ່າທີ່ຈຳເປັນ. ແຕ່ສຳລັບທ່ານທີ່ກຳລັງກ້າວເຂົ້າສູ່ການເປັນຄຣູຂັ້ນທຳອິດ ການຕຽມການສອນທີ່ຣະອຽດ ເຫັນວ່າ ມີຄວາມຈຳເປັນແກ່ທ່ານຫລາຍ.

**ການຕຽມການສອນ.** ແມ່ນການກະຕຽມຄວາມຮູ້ທີ່ຈະສອນ ການວາງແຜນການສອນ ການຈັດຣະດັບປະສົບການ ກິຈກັມກົລວິທີ ແລະອຸປກອນຕ່າງໆ, ເພື່ອໃຫ້ການສອນດຳເນີນໄປດ້ວຍດີຖືກຕ້ອງຕາມຫລັກວິຊາ ແລະເກີດປໂຍດແກ່ຜູ້ຮຽນຫລາຍທີ່ສຸດ. ການຕຽມການສອນເປັນປໂຍດແກ່ຄຣູຫລາຍ .

໑— ເຮັດໃຫ້ຄຣູຮຽນຮູ້ຈຸດປະສົງຂອງສິ່ງທີ່ຈະສອນ ແລະຈັດຕຽມການສອນໃຫ້ສອດຄ້ອງກັບຈຸດປະສົງນັ້ນ.

໒ ຊ່ວຍໃຫ້ຄູຮູ້ວ່າ ຈະສອນເມື່ອໃດ ຈະສອນຫຍັງແດ່ ຈະສອນນ້ອຍຫລາຍປານໃດ ແລະຈະສອນດ້ວຍວິທີໃດ.

໓- ຊ່ວຍລົດຄວາມຜິດພາດໃນການສອນ.

໔- ຊ່ວຍເຮັດໃຫ້ຄູມີເວລາພິຈາຣະນາອຸປກອນການສອນ ແລະກົລວິທີການສອນທີ່ຈະນຳມາໃຊ້ນັ້ນວ່າມີຄວາມເໝາະສົມພຽງໃດ

໕- ຊ່ວຍໃຫ້ຄູສາມາດເອົາວິຊາຕ່າງໆມາສຳພັນກັນໄດ້ດີ.

໖- ຊ່ວຍໃຫ້ຄູໄດ້ວັດຜົນແທກການຮຽນການສອນໄດ້ຢ່າງຖືກຕ້ອງ.

໗- ພາໃຫ້ຄູມີຄວາມໝັ້ນໃຈໃນຕົວເອງຍິ່ງຂຶ້ນ.

໘- ພາໃຫ້ການຮຽນການສອນດຳເນີນໄປຢ່າງຮຽບຮ້ອຍ ມ່ວນຊື່ນ ບໍ່ນ່າເບື່ອ.

໙- ຊ່ວຍໃຫ້ນັກຮຽນຂອງທ່ານເກີດມີຄວາມພາກພູມໃຈ ຈິງຮັບນັບຖືໃນຕົວທ່ານວ່າ ທ່ານກໍເປັນຄູສອນທີ່ດີຜູ້ນຶ່ງ.

໑໐- ໃນທີ່ສຸດ ພາໃຫ້ຄູປະຈຳຊັ້ນ ທ່ານຫົວໜ້າໝວດມີຄວາມໄວ້ວາງໃຈໃນຕົວທ່ານ ວ່າທ່ານນັ້ນກຳລັງເຮັດຫຍັງ ສອນຫຍັງໃຫ້ແກ່ນັກຮຽນທີ່ຮັກແພງຂອງເຂົາ.

## ການຕຽມການສອນ.

ຄວນດຳເນີນການຕາມຫົວຂໍ້ດັ່ງຕໍ່ໄປນີ້ :

໑- ໃຫ້ຮຽນຮູ້ຫລັກສູດ ໃຫ້ເຂົ້າໃຈເຖິງຈຸດປະສົງແລະຂອບທີ່ຈະສອນ.

໒- ໃຫ້ສຶກສາຄວາມຕ້ອງການຂອງນັກຮຽນ ແລ້ວວາງໂຄງການສອນຕຣອດຮອດວິທີການວັດແທກຜົນການຮຽນ ການສອນຂອງຕົນ.

໓- ບັນທຶກວິທີການສອນໄວ້ຢ່າງມີຣະບຽບ.

໔- ຕ້ອງທົບທວນສິ່ງທີ່ຈະໄປສອນກ່ອນອອກໄປສອນແທ້ໆເພື່ອກັນລືມ.

໕- ຕຽມອຸປກອນການສອນໃຫ້ເໝາະສົມກັບນັກຮຽນ ລັກສນະຂອງວິຊາ ສຖານະການ ແລະສະຖານທີ່.

໖- ກະຕຽມວຽກທີ່ຈະໃຫ້ເດັກນັກຮຽນເຮັດ ເພື່ອໃຫ້ມີການເຂົ້າໃຈໃນບົດ



ຮຽນໃຫ້ເລິກຊຶ້ງໃຫ້ຮູ້ໄວ້ລ່ວງໜ້າ.

໗- ກະຕຽມວິທີສອນ ຄື ໃຫ້ເລືອກວິທີສອນທີ່ເໝາະສົມກັບວິຊາ.

໘- ຄູຕຽມຕົວ ປັບປຸງຄວາມຮູ້ທີ່ຈະໄປສອນແລະວິທີສອນໃຫ້ນັກຮຽນມ່ວນຊື່ນແລະເຂົ້າໃຈດີ.

໙- ຕຽມຕົວນັກຮຽນໃຫ້ ມີຄວາມພ້ອມທີ່ຈະຮຽນ ໂດຍວິທີການເຮັດໃຫ້ນັກຮຽນເກີດມີຄວາມສົນໃຈໃນບົດຮຽນທີ່ຈະສອນນັ້ນເສັຽກ່ອນ .

## ການຕຽມການສອນນັ້ນມີຫລາຍຢ່າງດັ່ງຕໍ່ໄປນີ້ :

**໑. ການຕຽມການສອນໃນຣະຍະຍາວ.** ( ຕຣອດປີ ຖ້າເປັນຄູປະຈຳຊັ້ນ ແຕ່ສຳລັບນັກຮຽນຝຶກຫັດສອນແລ້ວ ກໍແມ່ນຣະຍະເວລາທີ່ທ່ານຈະຕ້ອງຝຶກຫັດສອນທັງໝົດ ຄືໃນຣະຍະ ໑ ໄຕຣມາດ)

**໒. ການຕຽມການສອນລາຍເດືອນ.** ຫລືການຕຽມການສອນເປັນສູນສົນໃຈ.

**໓. ການຕຽມການສອນລາຍວັນ.**

**ການຕຽມການສອນຣະຍະຍາວ.** ຈາກປະສົບການທີ່ນັກຮຽນຝຶກຫັດສອນຣຸ່ນກ່ອນ ທາງວິທຍາລັຍຄູໄດ້ສັງເກດເຫັນວ່າ ມີນັກຮຽນຄູຫລາຍຄົນ ມີຄວາມຜິດເຄືອງໃນດ້ານການປະຕິບັດໜ້າທີ່ການສອນ. ນັກຮຽນຄູເຫລົ່ານີ້ ລ້ວນແລ້ວແຕ່ຜູ້ລືມໜ້າທີ່ສຳຄັນອັນນຶ່ງ ຄື: ການກະຕຽມການສອນໄວ້ລ່ວງໜ້າໃນຣະຍະອັນຍາວ. ວຽກການສອນເປັນວຽກທີ່ຕ້ອງການຄວາມຣະອຽດທີ່ຖ້ວນ ມີຂອບເຂດຈຳກັດ ຖືກຕ້ອງຕາມຄວາມຮູ້ ຄວາມສາມາດຂອງນັກຮຽນ ແລະເໝາະສົມກັບສພາບການທຸກຢ່າງ ວຽກການສອນບໍ່ແມ່ນຫລິ້ນການພະນັນ ຊຶ່ງມີຫວັງໄດ້ ຫລື

ມີຫວັງເສັຽ. ການຮຽນຮູ້ຂອງເດັກນັກຮຽນເກີດຂື້ນໄດ້ເຕັມຂີດຂັ້ນຂອງມັນກໍຕໍ່ເມື່ອຄຣູຜູ້ສອນໄດ້ວາດພາບໄວ້ລ່ວງໜ້າຢ່າງຮຽບຮ້ອຍເທົ່ານັ້ນ. ຈາກຄວາມຈິງທີ່ໄດ້ກ່າວມານີ້ ວິທຍາລັຍຄຣູຈຶ່ງຢາກຂໍແນະນຳນັກຮຽນຄຣູທັງຫລາຍຈົ່ງໝັ້ນໃຈກະຕຽມການສອນຂອງຕົນໃນເວລາອອກຝຶກຫັດສອນໄວ້ໃນຣະຍະຍາວສເມີ ຄື ເມື່ອທ່ານຖືກກຳນົດຕົວອອກຝຶກສອນແລ້ວກ່ອນອື່ນ ທ່ານຕ້ອງຄິດສ້າງເຄົ້າໂຄງການສອນຂອງທ່ານໄວ້ໂລດ ດັ່ງຂໍ້ແນະນຳດັ່ງຕໍ່ໄປນີ້;

- ນັກຮຽນຄຣູຕ້ອງສຶກສາຫລັກສູດໃຫ້ເຂົ້າຢ່າງແຈ່ມແຈ້ງແລ້ວຈັດເນື້ອເຣື່ອງວິຊາທີ່ມີຄວາມສຳພັນກ່ຽວຂ້ອງກັນເຂົ້າເປັນໝ່ວຍ ຫລືເປັນສູນລວມໃຈ.
- ຈັດແບ່ງເນື້ອວິຊາອອກເປັນຕອນໆໃຫ້ເໝາະສົມກັບເວລາສອນທັງໝົດ.
- ຄິດຫາ ສະສົມອຸປກອນການສອນທີ່ຈະເອົາມາສອນໄວ້ລ່ວງໜ້າສເມີ. ອຸປ-ກອນເຫລົ່ານີ້ອາດຫາມາໄດ້ຈາກ ; ຄຣູແລະນັກຮຽນສ້າງຂຶ້ນຫລືຢືບຢືມຈາກຊາວບ້ານກໍໄດ້.
- ກຳນົດກິຈກັມພິເສດໃຫ້ນັກຮຽນໄດ້ປະຕິບັດ ເພື່ອຫວັງເພີ້ມພູນຄວາມຮູ້ ຄວາມເຂົ້າໃຈ ແລະ ຄວາມຈຳນິຈຳນານໃນວິຊາທີ່ຄຣູສອນນັ້ນໆ .

ສຳລັບການຕຽມການສອນໃນຣະຍະຍາວນີ້ ນັກຮຽນຄຣູຈະໄດ້ຮັບຄວາມຊ່ວຍເຫລືອແນະນຳຈາກຄຣູປະຈຳຊັ້ນ ທ່ານຫົວໜ້າໝວດ ແລະອາຈານຝຶກຫັດສອນຂອງທ່ານ.



## ຕົວຢ່າງ ຕາຣາງການຕຽມການສອນຣະຍະຍາວ

| ເດືອນ | ຈຳນວນວັນ | ໝ່ວຍວິຊາ ຫລືໝ່ວຍງານ | ກິຈກັມ | ອຸປກອນ | ການວັດຜົນ |
|---|---|---|---|---|---|
| ຂຽນຊື່ເດືອນ | ແບ່ງໃຊ້ເຮັດອັນໃດຈັກວັນ | ຂຽນຊື່ໝ່ວຍວິຊາທີ່ຈະສອນ ຫລືວຽກທີ່ຈະເຮັດພາຍໃນ ຈຳນວນວັນທີ່ກຳນົດໄວ້ ໃນເດືອນນຶ່ງໆ ອາດມີຫຼາຍວິຊາ | ເລືອກກິຈ-ກັມສະແດງການສຶກສານອກສຖານທີ່ | ອຸປກອນທີ່ຈະເອົາມາຊ່ວຍການສອນ ຫລືວຽກທີ່ກຳນົດໄວ້ບອກໄວ້ ວ່າມີຢູ່ແລ້ວຈະເຮັດຂຶ້ນໃໝ່ ຫລືຈະຢືມມາ | ເອົາໄວ້ບັນທຶກເມື່ອທຳໄປແລ້ວ ວ່າຮຽບຮ້ອຍຫລືມີເຫດຂັດຂ້ອງແນວໃດ |

## ການຕຽມການສອນລາຍອາທິດ.

ການຕຽມການສອນລາຍອາທິດ ແມ່ນການກຳນົດວ່າຈະສອນອັນໃດ ແດ່ໃສ ໄປຮອດໃສ ໃນຮອບອາທິດນັ້ນ. ຄຣູຕ້ອງຄິດເລື້ອຍໆວ່າ ນັກຮຽນໄດ້ຮຽນຮູ້ອັນໃດແດ່ມາແລ້ວ ໃນອາທິດກ່ອນ ໄດ້ຜົນດີຫລື ມີຂໍ້ບົກພ່ອງອັນໃດແດ່ ນັກຮຽນຄວນຈະຮຽນຮູ້ອັນໃດອີກໃນອາທິດຕໍ່ມາ ຈະມີວິທີສອນຢ່າງໃດ ຈະໃຊ້ອັນໃດເປັນອຸປກອນການສອນ.

ຈະຈັດກິຈກັມອັນໃດແດ່ ຈະວັດແທກການຮຽນຢ່າງໃດ. ວິຊາທີ່ຈະສອນນັ້ນຄວນເຮັດໄວ້ເປັນວິຊາ ເພື່ອຄວາມສະດວກໃນການສອນ ແລະການທີ່ຈະແຕ່ງບົດສອນປະຈຳວັນ ເຊັ່ນ: ໝວດ ພາສາລາວ ໝວດພາສາຝຣັ່ງ ໝວດວິຊາເລກ ໝວດວິທຍາສາດ ໝວດສັງຄົມ ໝວດພລານາມັຍ ໝວດສິລປະສຶກສາ ໝວດຫັຖສຶກ ເປັນຕົ້ນ.

## ຕາຣາງລາຍການສອນປະຈຳອາທິດ

ປີການສຶກສາ ໄຕຣມາດທີ ............ ເດືອນ ............ ອາທິດທີ ............

| ໝວດວິຊາ ຫລືໜ່ວຍງານ | ເນື້ອເຣື່ອງ | ຈຸດປະສົງ | ວິທີສອນ ແລະກິຈກັມ | ອຸປກອນການສອນ | ວັດຜົນ | ໝາຍເຫດ |
| --- | --- | --- | --- | --- | --- | --- |
| ຂຽນຊື່ໝວດວິຊາ ຫລືໜ່ວຍງານ | ບັນທຶກເນື້ອເຣື່ອງຫຍໍ້ຂອງບົດຮຽນ | ເວົ້າເຖິງຄວາມມຸ່ງໝາຍທີ່ໃຫ້ ໑/ ຄວາມຮູ້ ໒/ ຄວາມຊຳນານ ໓/ ທັສນະຄະຕິ | ເລືອກວິທີສອນ ຈະໃຊ້ວິທີໃດບັນຣະຍາຍຫຼືນປັນກັນກັບຮຽນ | ຈະໃຊ້ອັນໃດມາຊ່ວຍໃນການສອນ | ຈະໃຊ້ວິທີໃດ ຂຽນຕອບ ວິທີອື່ນໆ | ເອົາໄວ້ບັນທຶກເມື່ອໝົດການສອນ |



## ການຕຽມການສອນລາຍວັນ.

ການຕຽມການສອນ ເປັນຂອງຈຳເປັນແລະສຳຄັນທີ່ສຸດ ການສອນລາຍວັນຈະໃຫ້ເກີດຜົນດີຕ້ອງມີການກະຕຽມຢ່າງຮອບຄອບມາກ່ອນ ຄຣູຕ້ອງກຽມລ່ວງໜ້າຢ່າງນ້ອຍນຶ່ງວັນວ່າຈະສອນຫຍັງສອນພຽງໃດຈະສອນຢ່າງໃດ ໃຫ້ສອດຄ່ອງກັບແຜນການຣະຍະຍາວສເມີ. ແລະຍັງຈະຕ້ອງໃຫ້ສອດຄ່ອງກັບການຕຽມການລາຍເດືອນແລະລາຍອາທິດອີກດ້ວຍ. ການຕຽມການຝຶກສອນລາຍວັນນີ້ ຕ້ອງເຮັດທຸກໆວັນແລະເຮັດຢ່າງສມ່ຳສເມີ ເພື່ອເປັນແນວທາງບໍ່ໃຫ້ຫລົງລືມ ແລະຫາກຈຳເປັນເຮັດໃຫ້ຄຣູຄົນນັ້ນບໍ່ສາມາດມາສອນໄດ້ ຄຣູຜູ້ມາແທນຈະໄດ້ມີແນວການສອນ ແລະສາມາດສອນແທນໄດ້ຢ່າງຖືກຕ້ອງ.

ການບັກທຶກການສອນລາຍວັນຄວນນຶກເຖິງສິ່ງຕໍ່ໄປນີ້:

໑— ຄວາມມຸ່ງໝາຍຂອງວິຊາສອນ: **ດ້ານຄວາມຮູ້ ດ້ານຄວາມຊຳນານ ດ້ານທັສນະຄະຕິ**

໒— ຄຣູຕ້ອງເຂົ້າໃຈເນື້ອວິຊາທີ່ຈະສອນຢ່າງແຈ່ມແຈ້ງ ແລະກຳນົດການສອນໃຫ້ເໝາະສົມແກ່ຣະດັບຄວາມຮູ້ຂອງນັກຮຽນ.

໓— ຄວາມຮູ້ເດີມຂອງນັກຮຽນ ເຂົາເຈົ້າໄດ້ຮູ້ອັນໃດແດ່ແລ້ວ ເຮັດອັນໃດເປັນແດ່ແລ້ວ ເພື່ອຈັດແນວການສອນໃຫ້ສອດຄ່ອງ ແລະຕໍ່ເນື່ອງກັນ,

໔ ຄິດຫາວິທີສອນທີ່ຈະເປັນປໂຍດຫລາຍທີ່ສຸດ ບາງບົດຮຽນໃຊ້ວິທີສອນຊະນິດບໍ່ໄດ້ຜົນ ຄຣູຕ້ອງໃຊ້ວິທີສອນທີ່ເໝາະສົມກວ່າ.

໕— ເລືອກອຸປກອນການສອນທີ່ຊ່ວຍການສອນຂອງຄຣູ ແລະການຮຽນຂອງນັກຮຽນໃຫ້ໄດ້ຜົນດີ.

໖— ກຳນົດເວລາໃຫ້ພໍດີ ບໍ່ຕ້ອງຄ້າງ ຫລືສອນໝົດກ່ອນເວລາດົນໆ ຫ້ອງຮຽນຈະຂາດຣະບຽບ. ທາງທີ່ດີ ໃຫ້ນັກຮຽນຝຶກຫັດສອນ ສອນທົດລອງຕໍ່

ໜ້າໝູ່ເບິ່ງກ່ອນວ່ານັ້ນຈະກິນເວລາເທົ່າໃດ.

໗– ກໍານົດກິຈກັມຕໍ່ເນື່ອງເພື່ອສົ່ງເສີມການຮຽນໃຫ້ໄດ້ຜົນດີຍິ່ງຂຶ້ນ ໃຫ້ນັກຮຽນໄດ້ເຮັດອຽກຮ່ວມກັນ.

໘– ຕ້ອງບັນທຶກການສອນລ່ວງໜ້າ ບໍ່ແມ່ນສອນແລ້ວຈຶ່ງມາບັນທຶກໄວ້.

໙– ເຮັດບັນທຶກການສອນແບບງ່າຍໆຊັດແຈ້ງດີ ຮຽບຮ້ອຍ ບໍ່ໃຊ້ຄໍາເວົ້າ ຫລືປໂຍກຟູມເຟືອຍ ເພື່ອເວັ້ນຈາກການເສັຽເວລາ ຕ້ອງບັນທຶກແຕ່ສະເພາະສິ່ງທີ່ຈະສອນເທົ່ານັ້ນ,

໑໐ - ໃຫ້ມີການກວດຜົນທຸກໆຄັ້ງເມື່ອສອນຈົບແລ້ວ, ໃຫ້ປາກເປົ່າ ຫລືຂຽນກໍໄດ້.



# ຕົວຢ່າງຕາຣາງບັນທຶກການສອນປະຈໍາວັນ

( ໃຫ້ໃຊ້ເຈັ້ຽສອງແຜ່ນຕິດກັນ ເພີຍດູບເບີ )

| ວັນເດືອນ ປີ ເວລາ ຊັ້ນ ສອນ ວິຊາສອນ | ເນື້ອວິຊາ | ຈຸດປະສົງ | ວິທີສອນ ແລະກິຈ–ກັມ | ອຸປກອນ ການສອນ | ການກວດ ຜົນ | ໝາຍ ເຫດ |
|---|---|---|---|---|---|---|
| ຂຽນວັນເດືອນປີທີ່ຈະສອນ ເວລາເຣີ່ມເຖິງຈົບບົດຮຽນ ຊັ້ນທີ່ຈະສອນ ວິຊາທີ່ຈະສອນ | ບັນທຶກຫົວຂໍ້ບົດຮຽນທີ່ຈະສອນໃນຊົ່ວໂມງນັ້ນໆເພື່ອໃຫ້ຮູ້ຂອບເຂດຂອງເນື້ອວິຊາ | ຈະໃຫ້ຮູ້ອັນໃດ ໃຫ້ມີຄວາມຊໍານານແນວໃດໃຫ້ເກີດທັສນະຄະຕິຢ່າງໃດ | ຈະໃຊ້ວິທີສອນແບບໃດ ແດ່ ລົມກັນເປັນໝູ່ ປາຖະກະຖາ ສຶກສານອກສຖານທີ່ ສາທິດຫລືອາດໃຊ້ຫລາຍວິທີປົນກັນກໍໄດ້ | ຈະໃຊ້ອຸປກອນແນວໃດ ? ໃຊ້ເວລາອະທິບາຍ ຫລືໃຊ້ສລຸບຄວາມຂຽນໄວ້ໃຫ້ຈ່າງແຈ້ງ | ຈະໃຊ້ວິທີກວດແບບໃດ ແດ່ ປາກເປົ່າ ຂຽນຕອບຫລືຈະໃຊ້ວິທີອື່ນຄວນບອກໄວ້ຊັດແຈ້ງ | ໄວ້ບັນທຶກເມື່ອຈົບບົດຮຽນວ່າເດັກເຂົ້າໃຈປານໃດ ມີຂໍ້ຂາດເຂີນບໍ ? |

# ບົດສອນວິທະຍາສາດ.

ວັນທີ ໑໓/໔/໗໕.
ແຕ່ ໘ ມ - ໘ ມ.໓໐
ຊັ້ນ .... ປ. ໔

**ເລື່ອງ :** ແກ່ນ ແລະເບັ້ຽ.
: ການກິນອາຫານຂອງແກ່ນ.
: ການ ປົ່ງຮາກແລະລຳຂອງໜໍ່.
: ພືດຕ້ອງການ ແສງແດດ ນ້ຳ ດິນ ອາກາດ.
: ສ່ວນຕ່າງໆຂອງຕົ້ນໄມ້.

**ຈຸດປະສົງ:** ທວນບົດຮຽນເກົ່າແລະທົດສອບຄວາມຈົດຈຳກ່ຽວກັບສ່ວນປະກອບຂອງພືດແລະສິ່ງທີ່ພືດຕ້ອງການ.
: ຄວາມຮູ້ກ່ຽວກັບການກິນອາຫານຂອງເບັ້ຽຢູ່ໃນແກ່ນ.
: ຄວາມຮູ້ກ່ຽວກັບການແຕກໜໍ່ຂອງແກ່ນ
: ໃຫ້ນັກຮຽນຮູ້ຈັກຄຸນຄ່າແລະສົນໃຈເລື່ອງພືດຕ່າງໆ.

**ອຸປກອນ:** ຮູບຕົ້ນໄມ້ທີ່ໃຫ້ອາຫານເຄື່ອງນຸ່ງຫົ່ມໄມ້ປຸກເຮືອນຄວາມສວຍງາມ
: ເບັ້ຽໝາກຖົ່ວທີ່ໄດ້ປູກໃສ່ແກ້ວ ຫຼືຈອກແກ້ວ ( ຄຣູຕຽມໄວ້ລ່ວງໜ້າ)
: ແກ່ນໝາກຖົ່ວ ປະມານ ໔໐ ແກ່ນ.
: ມີດນ້ອຍ.
: ແວ່ນຂຍາຍ.

## ວິທີສອນ ແລະກິຈກັມ. ( ໃຫ້ເຮັດໄປເທື່ອລະຂັ້ນ ການໄປຊ້າຫລືໄວຂຶ້ນຢູ່ກັບຄວາມເຂົ້າໃຈຂອງເດັກນັກຮຽນ )

## ໃຫ້ເດັກນັກຮຽນໄດ້ສັງເກດ ແລະພິຈາຣະນາຄັກໆ

ຖາມ : ຖ້າບໍ່ມີພືດຕ່າງໆໃນໂລກນີ້ ສັດແລະຄົນຈະມີສີດຢູ່ໄດ້ບໍ ? ມະນຸດອາ



ໄສພືດຕ່າງໆໃນຊີວິດປະຈຳວັນຢ່າງໃດແດ່ ? ( ເດັກຕິດຫາຄຳຕອບຂອງໃຜລາວ )

ຕອບ : ມະນຸດແລະສັດທັງຫລາຍ ອາໄສພືດ ເພື່ອດຳຣົງຊີວິດຢູ່ໄດ້.
ພ້ອມກັນນີ້ ໃຫ້ຄຣູເອົາຮູບຕົ້ນໄມ້ທີ່ໃຫ້ອາຫານ ເຄື່ອງນຸ່ງຫົ່ມ ໄມ້ປຸກເຮືອນ ແລະໃຫ້ຄວາມສວຍງາມ ມາໃຫ້ເດັກເບິ່ງ.

໒– ຖາມ : ເພື່ອຕົ້ນໄມ້ຈະມີຊີວິດຢູ່ໄດ້ ຕົ້ນໄມ້ຈະຕ້ອງການອັນໃດແດ່ ?
ຕອບ : ແສງແດດ ນ້ຳ ດິນ ອາກາດ.

໓– ສັງເກດແກ່ນໝາກຖົ່ວທີ່ກຳລັງແຕກໃໝ່ໆ
ຖາມ : ໃນແກ່ນໝາກຖົ່ວທີ່ເຈົ້າຜ່າເບິ່ງນັ້ນ ເຈົ້າສັງເກດເຫັນຫຍັງແດ່ ?
ຕອບ : ມີງົມສອງອັນ ແລະໜໍ່ອ່ອນ.

ຮຽນຮູ້ເລື່ອງສາຍເຫດຂອງການແຕກໜໍ່ ໃຫ້ນັກຮຽນສັງເກດແກ່ນທີ່ກ້າໄວ້ໃນລັກສນະຕ່າງໆກັນ ໃນກະບະດິນຊາຍແຫ້ງ. ໃນກະບະດິນທີ່ຊຸ່ມໂພດ. ໃນກະບະດິນຊຸ່ມແລະມີອາກາດ.

ຖາມ : ນັກຮຽນສັງເກດເຫັນວ່າ ຢ່າງໃດກ່ຽວກັບແກ່ນທີ່ຢູ່ໃນກະບະ ແຕ່ລະກະບະນີ້ ?
ຕອບ : ແກ່ນທີ່ຝັງຢູ່ໃນຊາຍແຫ້ງນັ້ນບໍ່ອອກໜໍ່ ຍ້ອນບໍ່ມີການຊຸ່ມ.
: ແກ່ນທີ່ຝັງລົງເລິກໃນກະບະຊາຍຊຸ່ມນັ້ນ ແຕກງອກ ແຕ່ວ່າ ເນົ່າ ເພາະຂາດອາກາດ.
: ແກ່ນທີ່ຝັງໄວ້ໃນດິນຊຸ່ມແລະປະໄວ້ບ່ອນມີອາກາດດີ ເຫັນແຕກງອກງາມດີ.

໔– ໃຫ້ເດັກນັກຮຽນສັງເກດເບັ້ຽໝາກຖົ່ວທີ່ຄຣູໄດ້ຕຽມໄວ້ແລ້ວ ວ່າມີສ່ວນຕ່າງໆອັນໃດແດ່ ? ມີລຳຕົ້ນ ມີໃບ ແລະມີຮາກ ຕໍ່ໄປນີ້ເປັນຄຳຖາມໃຫ້ເດັກໄດ້ພິຈາຣະນາ.

໑ ຖ້າເອົາຕົ້ນໄມ້ມາຢູ່ບ່ອນມືດໆຈະດົນເປັນຢ່າງໃດ ? ສີຂຽວກໍຈະລອກອອກ.

໒ ໃບໄມ້ ປົ່ນໜ້າຂຶ້ນຟ້າທາງດຽວກັນເປັນດ້ວຍເຫດໃດ? ເພື່ອຮັບແສງແດດ.

໓- ຖ້າເອົາເບັ້ຽໄມ້ມາປູກໃສ່ໝໍ້ຫລືກະປ໋ອງ ເປັນຫຍັງເພິ່ນຈຶ່ງເຈາະກົ້ນມັນ? ເພື່ອລະບາຍນ້ຳໃຫ້ຖືກຕ້ອງຕາມຄວາມຕ້ອງການ.

໔ ຖ້າຫົດນ້ຳຕົ້ນໄມ້ຫລາຍເກີນໄປ ຕົ້ນໄມ້ຈະເປັນແນວໃດ? ເປື່ອຍ ເນົ່າຕາຍໄປ

໕- ຖ້າຫົດນ້ຳບໍ່ພຽງພໍເບັ້ຽໄມ້ຈະເປັນແນວໃດ? ຫ່ຽວແຫ້ງແລະຕາຍໄປຄືກັນ

໖- ເບັ້ຽຢູ່ໃນແກ່ນທີ່ຍັງບໍ່ມີຮາກນັ້ນ ເອົາອາຫານມາແຕ່ໃສ? ຈາກງິ້ມຫລືໃບລ້ຽງ.

໗- ລຳຕົ້ນແລະໃບປົ່ງໄປໃນທິດທາງໃດ? ລຳຕົ້ນຂຶ້ນເທິງ ຮາກລົງລຸ່ມ.

**ໃຈຄວາມ.** ຕົ້ນໄມ້ເປັນສິ່ງຈຳເປັນແກ່ສັດແລະມະນຸດ. ຕົ້ນໄມ້ໃຫ້ອາຫານ ໄມ້ປູກເຮືອນ ເຄື່ອງນຸ່ງຫົ່ມ ແລະຄວາມສວຍງາມ ແກ່ມະນຸດ. ຕົ້ນໄມ້ຕ້ອງການແສງແດດ ນ້ຳ ດິນອາກາດ ເພື່ອມີຊີວິດຢູ່ໄດ້. ເບັ້ຽຢູ່ໃນແກ່ນອາໄສອາຫານຈາກ ງິ້ມ ຫລືເອີ້ນວ່າ ໃບລ້ຽງ.

**ການວັດຜົນແລະກິຈການ.** ( ຖາມນັກຮຽນ ສິ່ງທີ່ໄດ້ຮຽນມາແລ້ວວ່າເຂົ້າໃຈແລ້ວຫລືຍັງ ) ເພື່ອໃຫ້ບົດຮຽນມີຄ່າສູງຂຶ້ນ ຄຣູຕ້ອງຫາວຽກໃຫ້ເດັກໄດ້ລົງມືປະຕິບັດ. ຄື

— ແບ່ງນັກຮຽນອອກເປັນໝູ່ຕາມຄວາມຕ້ອງການ.

— ຢາຍແກ່ນພາກຖົ່ວໃຫ້ເຂົາເຈົ້າ.

— ສັ່ງໃຫ້ເຂົາເຈົ້າປູກໃສ່ແກ້ວ ຫລືໃສ່ກະປ໋ອງນ້ອຍໆ ບອກວ່າພວກໃດຈະປູກດີ ແລະຈະຕ້ອງໄດ້ຮັບລາງວັນ ຫລືໃຫ້ຄະແນນພາກປະຕິບັດ.

— ໃຫ້ນັກຮຽນບັນທຶກ ວັນເວລາ ທີ່ລົງມືກ້າ ແລະເຝົ້າສັງເກດ ບັນທຶກວັນເວລາທີ່ແຕກໜໍ່ ແລະໃຫ້ສັງເກດຜົນການງອກງາມແຕ່ລະມື້ ວ່າມີຫຍັງເພີ່ມຂຶ້ນແດ່ ມັນຈະເລີນໄວປານໃດ ແຕກເປັນ ມມ.

— ເມື່ອນັກຮຽນໄດ້ເອົາໃຈໃສ່ສັງເກດປະມານ ໑ ອາທິດ ຫຼື ໒ ອາທິດ ຮອດໂມງຮຽນວິທຍາສາດ ໃຫ້ເດັກລາຍງານຜົນຂອງການປະຕິບັດຂອງເຂົາເຈົ້າ



# ຫລັກການສອນ

ຄຣູມີໜ້າທີ່ອັນສຳຄັນ ຄື ສອນໃຫ້ນັກຮຽນເຂົ້າໃຈບົດຮຽນ ແລະມີພັທນາການທຸກດ້ານ. ຄຣູບາງຄົນສອນດີ ຄຣູບາງຄົນມີຄວາມຮູ້ສູງແຕ່ສອນນັກຮຽນບໍ່ຮູ້ເຣື່ອງ ອັນນີ້ເພາະຄຣູສອນບໍ່ເປັນ ແລະໃຊ້ວິທີສອນບໍ່ຖືກຕ້ອງ. ສົມນການສຶກສາໃຫ້ຮູ້ຈັກແລະເຂົ້າໃຈຫລັກການສອນ ແລະວິທີສອນແບບງ່າຍໆແລ້ວນຳມາດັດແປງ ໃຊ້ໃນການສອນ ຈຶ່ງນັບວ່າເປັນຂອງຈຳເປັນທີ່ສຸດ.

## ຫລັກການສອນທົ່ວໄປ

=ສອນຈາກສິ່ງທີ່ນັກຮຽນຮູ້ແລ້ວໄປຫາສິ່ງທີ່ຍັງບໍ່ຮູ້.

—ສອນຈາກສິ່ງທີ່ງ່າຍໄປຫາສິ່ງທີ່ຍາກ.

—ສອນຈາກສິ່ງທີ່ທັມມະດາສາມັນໄປຫາສິ່ງທີ່ສລັບຊັບຊ້ອນ.

—ສອນໃຫ້ເປັນໄປຕາມທັມມະຊາດ.

—ສອນຈາກສິ່ງທີ່ມີຕົວຕົນໄປຫາສິ່ງທີ່ບໍ່ມີຕົວຕົນ.

—ສອນໂດຍໃຊ້ເຫດຜົນໃຫ້ເໝາະສົມກັບຈິດໃຈຂອງນັກຮຽນ.

—ສອນໃຫ້ຜ່ານປະສາດສັມຜັດທັງຫ້າ ຕາ ( ຫລຽວເຫັນ ) ຫູ ( ໄດ້ຍິນ ) ຈັບບາຍ ( ຮູ້ສຶກ ) ລີ້ນ ( ໄດ້ກິນ ) ດັງ ( ໄດ້ຊົມຮົມ ).

—ສອນໃຫ້ມີຄວາມມ່ວນຊື່ນ ນ່າສົນໃຈ.

—ສອນໃຫ້ນັກຮຽນ ໄດ້ລົງມືເຮັດ ລົງມືປະຕິບັດແທ້ໆ.

—ສອນໃຫ້ນັກຮຽນ ຮູ້ຈັກຮຽນດ້ວຍຕົນເອງ.

## ຂໍ້ທີ່ຄວນປະຕິບັດສຳລັບຜູ້ຢາກເປັນຄຣູດີ

໑–ເວົ້າ ອະທິບາຍໃຫ້ແຈ່ມແຈ້ງ ສຽງດັງ ໄດ້ຍິນໝົດຫ້ອງ.

໒–ຫລຽວເບິ່ງນັກຮຽນ ຢ່າກົ້ມເບິ່ງພື້ນຫ້ອງ ເພດານ ຫລື ເບິ່ງອອກໄປທາງປ່ອງຢ້ຽມ ຈຸດທີ່ສົນໃຈທີ່ສຸດນັ້ນ ຄື ນັກຮຽນ.

໓–ຢືນສອນ ຈະໄດ້ເຫັນນັກຮຽນໝົດທຸກຄົນ ແລະນັກຮຽນກໍຫລຽວເຫັນໜ້າຄູເໝືອນກັນ

໔–ເວລາເວົ້າ ອະທິບາຍ ຄູຄວນຢືນຢູ່ຕໍ່ໜ້ານັກຮຽນ ຫ່າງຈາກໂຕະນັກຮຽນແຖວໜ້າພໍສົມຄວນບໍ່ແມ່ນຈະຍ່າງໄປໆມາໆ ຫລືຢືນເວົ້າຢູ່ທາງຫລັງນັກຮຽນ

໕–ຢືນຢ່າງສງ່າ ຜ່າເຜີຍ ຢ່າຍ່າງໄປມາໜ້າຊັ້ນ ຈະພາໃຫ້ນັກຮຽນອິນທົວ ການຍ່າງຂອງຄູຕ້ອງມີບົດບາດ ມີຄວາມໝາຍທີ່ເປັນຜົນດີການສອນ.

໖–ເຮັດທ່າທາງປະກອບແດ່ ພໍສົມຄວນ ໃຫ້ສົມກັບບົດຮຽນ ບໍ່ຄວນອອກທ່າທາງຫລາຍເກີນໄປ ຈົນນັກຮຽນເຫັນຄູເປັນຕົວຕລົກ.

໗–ເວລາຂຽນກະດານດໍາ ຕ້ອງເຊົາເວົ້າ ຄູຕ້ອງເວົ້າກັບນັກຮຽນ ບໍ່ແມ່ນເວົ້າກັບກະດານ

໘–ໃຊ້ເວລາຂຽນກະດານ ແຕ່ພໍສົມຄວນ ຢ່າປິ່ນຂຽນດົນເກີນໄປ ຄວນເວົ້າສລັບກັບຂຽນ ນັກຮຽນຈະບໍ່ເບື່ອ.

໙–ວິທີເປີເພັງສົມາແລ້ວອ່ານໃຫ້ເດັກຂຽນຕາມນັ້ນ ໃຫ້ຄູເວັ້ນເສັຽ ເພາະບໍ່ແມ່ນວິທີສອນ ແຕ່ເປັນການຂຽນຕາມຄໍາບອກ

໑໐–ສົ່ງເສີມໃຫ້ນັກຮຽນຖາມ ເມື່ອນັກຮຽນບໍ່ເຂົ້າໃຈ ຫລືເຂົ້າໃຈບໍ່ແຈ່ມແຈ້ງ.

໑໑–ເມື່ອນັກຮຽນຕ້ອງການອອກ ຄວາມຄິດເຫັນ ໃນເລື່ອງທີ່ຮຽນຄູຄວນສົ່ງເສີມ.

໑໒ ຄູຄວນໃຊ້ຄໍາຖາມທີ່ພາໃຫ້ນັກຮຽນໄດ້ໃຊ້ຄວາມຄິດຕອບ.

໑໓–ຄວນຫັດໃຫ້ນັກຮຽນຈົດຈາກຄວາມເຂົ້າໃຈ ບໍ່ແມ່ນຄູບອກໃຫ້ຈົດເທື່ອລະຄໍາ ເມື່ອນັກຮຽນໆຊັ້ນສູງຂຶ້ນໄປ ຈະສາມາດຈົດຄໍາບັນຣະຍາຍຂອງຄູເປັນ.

໑໔–ໃຊ້ອຸປກອນການສອນ ເຊັ່ນ ຮູບ ແຜ່ນປ້າຍ ຂອງຕົວຢ່າງໆລາໆ ມາຊ່ວຍເພື່ອໃຫ້ເຂົ້າໃຈບົດຮຽນດີຂຶ້ນ ແຕ່ຢ່າໃຊ້ອຸປກອນການສອນ ມາແທນຄູ.

໑໕–ເຂົ້າສອນກົງຕໍ່ເວລາ ແລະບໍ່ເລີກກ່ອນເວລາ.

໑໖–ໃຫ້ເອົາໃຈໃສ່ນັກຮຽນທຸກຄົນໃຫ້ທົ່ວເຖິງກັນ.



# ສິ່ງທີ່ນັກຮຽນຝຶກຫັດຄູຕ້ອງຈົດຈໍາ

**໑-ພາຍໃນຫ້ອງຮຽນ.** ຕ້ອງແນະນໍາໃຫ້ເດັກນັກຮຽນເຮັດຄວາມສະອາດເລື້ອຍໆ ມ້ຽນມັດສິ່ງຂອງໃຫ້ເປັນຣະບຽບ ສະດວກແກ່ການຈະເອົາອອກມາໃຊ້.

**໒-ດ້ານກິຣິຍາ ມາຣະຍາດ.** ຝຶກຫັດໃຫ້ນັກຮຽນສະແດງກິຣິຍາມາຣະຍາດອັນສຸພາບຮຽບຮ້ອຍ ຖ້າມີຜູ້ກະທໍາຜິດໃຫ້ຮີບດັດແປງແກ້ໄຂໂລດ ໂດຍຄວາມຊ່ວຍເຫລືອຂອງຄູປະຈໍາຊັ້ນ ເຊັ່ນ ຕັກເຕືອນແນະນໍາ ອະທິບາຍດ້ວຍເຫດຜົນ ລົງໂທດ.

**໓-ເວລາສອນ.** ກ່ອນຄູຈະເລີ່ມອະທິບາຍບົດຮຽນ ຕ້ອງເຮັດໃຫ້ເດັກຮຽນຕຽມຕົວເສັດກ່ອນ. ອະທິບາຍດ້ວຍຖ້ອຍສຽງສໍານຽງອັນນ່ອນນອນຫູ ໃຫ້ໄດ້ຍິນໝົດທຸກຄົນ. ໃຫ້ໝັ່ນກອດຄວາມເຂົ້າໃຈນັກຮຽນເລື້ອຍໆ ໂດຍໃຊ້ຄໍາຖາມທວນຄືນ ຄໍາຖາມຍາກໃຫ້ຜູ້ຮຽນເກັ່ງຕອບຄໍາຖາມງ່າຍໃຫ້ຜູ້ຮຽນອ່ອນຕອບ ທັງນີ້ ເພື່ອໃຫ້ນັກຮຽນທຸກຄົນຮູ້ສຶກວ່າ ເຂົາເຈົ້າສາມາດຮໍ່າຮຽນໄປໄດ້. ຖ້າມີສຽງຟົດນັ້ນຂຶ້ນໃນຣະຍະເວລາສອນ ຄູເຊົາອະທິບາຍເສັຽກ່ອນຈັກຄາວນຶ່ງ ເພື່ອຄວບຄຸມຣະບຽບ ແລ້ວຈຶ່ງອະທິບາຍຕໍ່.

**໔-ເວລານັກຮຽນເຮັດວຽກຂຽນ.** ເຊັ່ນເຮັດບົດຝຶກຫັດຄູຄວນຍ່າງເລາະລຽບເບິ່ງ ແລະ ຊ່ວຍໃຫ້ຄໍາຕັກເຕືອນ ແກ່ເຂົາເຈົ້າຢູ່ເລື້ອຍໆ.

**໕-ການໃຊ້ກະດານດໍາ.** ກ່ອນຈະສອນບົດຮຽນໃໝ່ທຸກຄັ້ງຕ້ອງລຶບກະດານໃຫ້ສະອາດ ເພື່ອເວັ້ນຈາກການສັບປົນກັນ ແລະການບໍ່ເປັນ

ຣະບຽບ. ເວລາສອນເຣື່ອງໃດເຣື່ອງນຶ່ງ ຄຣູຄວນໃຫ້ມີແຕ່ສະເພາະນັ້ນຢູ່ກະດານ ເພື່ອໃຫ້ເດັກເບິ່ງສະດວກ ແລະເຂົ້າໃຈງ່າຍ.

—ຂຽນໜັງສືໃຫ້ຄັກ ງາມ ບໍ່ໃຫ້ໂຕໃຫຍ່ແລະນ້ອຍເກີນໄປ.

—ພຍາຍາມຂຽນເບື້ອງເທິງຂອງກະດານເລື້ອຍໆເພື່ອໃຫ້ໝົດທຸກຄົນເຫັນງ່າຍ

—ເວລາກອດກະດານ ຕ້ອງໃຊ້ສໍ່ຂາວລີ ເພື່ອສະດວກໃນການເບິ່ງ.

**໖-ຮູບແຜ່ນທີ່.** ເວລາແຕ້ມຮູບ ຫລືແຜ່ນທີ່ໃສ່ກະດານດຳ ຕ້ອງແຕ້ມງ່າຍໆແລະແຈ່ມແຈ້ງ ບໍ່ໃຫ້ມີຮອຍຂີດທີ່ບໍ່ເປັນປໂຍດ. ໃຫ້ເວັ້ນຈາກການແຕ້ມເງາະໆງ່ຽງໆເກີນໄປ. ການໃສ່ສີກໍ່ໃຫ້ພໍດີພໍງາມ.

**໗ ການເຮັດບົດຝຶກຫັດ.** (ເລກ ແຕ່ງເຣື່ອງ ແຕ່ງປໂຍກ ຂຽນງາມ ບົດຝຶກຫັດອື່ນໆ) ສິ່ງເຫລົ່ານີ້ ຕ້ອງຝຶກຫັດໃຫ້ເດັກນັກຮຽນເຮັດໃສ່ພັບທຶກລອງສເມີ. ພັບທຶກລອງນີ້ຕ້ອງພຽນເຮັດ ພຽນຂຽນໃຫ້ງາມເຊັ່ນດຽວກັບພັບບົດຝຶກຫັດແທ້ ໃຫ້ໃຊ້ບັນທັດຂີດເສັ້ນ. ພັບທຶກລອງນີ້ຄຣູຈະຕ້ອງໄດ້ກວດເບິ່ງ ເໝືອນພັບທຶກອື່ນໆ ຫ້າມເດັກໃຊ້ເຈັ້ຽເສດ ຫລື ເຈັ້ຽບຣຸຍຍິງ ເປັນເຈັ້ຽທຶກລອງ ນອກຈາກເດັກຈະຂີດຂຽນຢ່າງບໍ່ຣະມັດຣະວັງ ບໍ່ຈົບບໍ່ງາມແລ້ວ ເດັກຈະຕ້ອງລຶກຖີ້ມ ຫລືຍອງໆຖີ້ມ ຈະພາໃຫ້ມີການເປື້ອນເປິະອີກດ້ວຍ.

**ການກວດ.** ບົດຝຶກຫັດທຸກໆບົດ ເມື່ອຄຣູໄດ້ກວດດູແລ້ວ ຈຳເປັນຕ້ອງກວດຕໍ່ໜ້ານັກຮຽນອີກ ແມ່ນກວດຢູ່ກະດານໃຫຍ່. ໃຫ້ນັກຮຽນກວດດ້ວຍສໍດຳ ກວດດ້ວຍຕົນເອງ. ຫ້າມເກັບບົດຝຶກຫັດທີ່ຄຣູບໍ່ທັນໄດ້ກວດ ມາກວດໃສ່ກະດານ. ຫລັກການກວດມີດັ່ງນີ້:

໑/ ຄຣູເປັນຜູ້ເກັບກວດເບິ່ງກ່ອນ.

໒/ ໃຫ້ນັກຮຽນທຸກຄົນໄດ້ກວດຂອງໃຜລາວ.

໓/ ເມື່ອເດັກກວດຮຽບຮ້ອຍສະອາດດີແລ້ວຄຣູຈຶ່ງໃຫ້ຄແນນ. ຖ້າເດັກຄົນໃດກວດບໍ່ຮຽບຮ້ອຍ ຂີ້ດ້ານມັກງ່າຍ ຕ້ອງໃຫ້ກວດໃໝ່ ຫລືຕັດຄແນນອອກໄປ.



**໘-ເວລາສອນພາສາ.** ຈະເປັນການສອນພາສາລາວ ຫລືພາສາຝຣັ່ງເສດ ກໍ່ຕາມ ສິ່ງສຳຄັນນັ້ນແມ່ນໃຫ້ເດັກນ້ອຍໄດ້ປາກ ໄດ້ເວົ້າຫລາຍໆ ໃຫ້ເຂົາເວົ້າປໂຍກຖາມແລະປໂຍກຕອບກັນປັ້ນໄປປັ້ນມາຈົນໃຫ້ມີຄວາມຄ່ອງແຄ້ວດີ. ສ່ວນຕົວຄຣູນັ້ນ ໃຫ້ເວົ້ານ້ອຍທີ່ສຸດ ແລະຄອຍກວດແກ້ເດັກນ້ອຍທີ່ເວົ້າຜິດ.

**໙-ເວລາສອນອ່ານ.** ເວລາທັງໝົດໃນການສອນອ່ານນີ້ ຄວນເປັນຂອງນັກຮຽນ. ສມັ້ນຄຣູໃຫ້ລູກສິດໄດ້ອ່ານໝົດທຸກຄົນ ອ່ານຕໍ່ໜ້າກັນ ອ່ານເປັນໝູ່ນ້ອຍໆ ໒ ຫລື ໓ ຄົນ ອ່ານເປັນໝູ່ໃຫຍ່ ຫ້າມອ່ານພ້ອມກັນໝົດຫ້ອງ. ເວລາສອນອ່ານ ຄຣູຕ້ອງເອົາໃຈໃສ່ກວດແກ້ສຳນຽງສຽງ ການຢຸດ ການລົງຈັງຫວະ ໃຫ້ເດັກອ່ານດັງສເມີ ຫ້າມເດັກອ່ານເປັນເພງແລະຮ້ອງລຳ ໃຫ້ອ່ານເປັນສຽງຄືເຮົາເວົ້າກັນແທ້ໆ ນອກຈາກນີ້ ໃນການສອນອ່ານຄຣູຕ້ອງເອົາໃຈໃສ່ ເວັ້ນຈາກການອະທິບາຍສັບ ໄວຍາກອນ ແລະອື່ນໆ ຊຶ່ງຈະເຮັດໃຫ້ຊົ່ວໂມງຫັດອ່ານນ້ອຍລົງ.

**໑໐-ເວລາສອນເລກ.** ຫລັງຈາກຄຣູໄດ້ອະທິບາຍກົດເກນຂອງເລກແລ້ວ ຕ້ອງໃຫ້ເດັກໄດ້ຄິດເລກໄລ່ເລກ ລົງມືເຮັດດ້ວຍຕົວເຂົາເຈົ້າເອງ. ບໍ່ແມ່ນຈະໃຫ້ເຂົາເຈົ້ານັ່ງເບິ່ງ ຟັງຄຣູອະທິບາຍ ແລະເຮັດໃຫ້ເບິ່ງ

**ເລກເຊໂອເມຕຣີ.** ຕ້ອງໃຫ້ເດັກໄດ້ມີອຸປກອນສຳເຣັດສເມີ ຢ່າສອນໂດຍບໍ່ມີຕົນຕົວ. ຕ້ອງຝຶກໃຫ້ນັກຮຽນໄດ້ໃຊ້ອຸປກອນເຊັ່ນ: ບັນທັດ ກອມປາ ຣາປອກເຕີ ເອແກ ເປັນຕົ້ນ. ໃຫ້ສອນຈາກຂອງຈິງເສັຽກ່ອນ ແລ້ວຈຶ່ງຄ່ອຍນຳພາມາໃສ່ຮູບແຕ້ມ ຮູບເສັ້ນ.

**ເລກວິທີວັດແທກ.** ມີຄຣູຫລາຍຄົນ ເອົາເຣື່ອງແມັດ ແຕ່ບໍ່ມີໄມ້ແມັດ ເອົາເຣື່ອງລິດ ແຕ່ບໍ່ມີລິດ ເອົາເຣື່ອງນ້ຳໜັກ ແຕ່ບໍ່ມີພານໂຕ້ນ

ຈິ່ງ ສພາບການສອນເຊັ່ນນີ້ເຫັນວ່າບໍ່ເໝາະສົມທີ່ສຸດ ເພາະວິຊາວັດແທກ ເປັນວິຊາທີ່ຕ້ອງປະຕິບັດ ແອບໃຊ້ໃຫ້ເປັນແທ້ໆ ເພື່ອເຂົາເຈົ້າຈະເອົາຄວາມຮູ້ເຫລົ່ານີ້ ໄປໃຊ້ໃນຊີວິດປະຈຳວັນຂອງເຂົາຢ່າງບໍ່ຕ້ອງສົງໃສ. ດັ່ງນັ້ນໂຮງຮຽນບໍ່ຄວນຈະເສັຽໂອກາດໃນການສອນວິຊານີ້. ຖ້າເຮົາຍັງຂາດອຸປກອນທີ່ມາຕຖານ ເຮົາກໍສາມາດສ້າງຂຶ້ນໄດ້ ແລະຢືບຢືມຈາກແຫ່ງອື່ນໄດ້.

## ໑໑ ເວລາສອນຫັດແຕ່ງປໂຍກແລະສອນສັບ.

ເຮົາຕ້ອງແນະນຳການປກອບປໂຍກ ແລະໃຫ້ຄຳອະທິບາຍແກ່ເຂົາ ສ່ວນສຳຄັນເຮົາຕ້ອງໃຫ້ລູກສິດແອບແຕ່ງປໂຍກແລະຂຽນໃຫ້ຖືກຕ້ອງ. ອີກສ່ວນນຶ່ງຄືເວລາຮຽນສັບໃໝ່ນັ້ນຕ້ອງໃຫ້ເດັກເຂົ້າໃຈຄຳສັບນັ້ນໃຫ້ຄັກໆແລ້ວນຳໄປໃຊ້ປະກອບເປັນປໂຍກໄດ້ຢ່າງຖືກຕ້ອງ.

## ໑໒-ການຫັດກ່າຍ.

ເປັນການຝຶກໃຫ້ເດັກ ໄດ້ມີຄວາມລະອຽດຖີ່ຖ້ວນໃນການຂຽນ. ເປັນການຫັດແອບໃຫ້ເດັກໄດ້ຈົດຈຳຄຳສັບທີ່ຮຽນໃໝ່ແລະຄຳຍາກ ນອກຈາກນີ້ຍັງພາໃຫ້ເດັກໄດ້ຮູ້ປໂຍກ ສຳນວນທີ່ຈັບງາມອີກດ້ວຍ. ເພື່ອຈະໃຫ້ການຫັດກ່າຍນີ້ ມີຄ່າສູງ ຄຣູຄວນ:

- ຄັດເລືອກເອົາຖ້ອຍຄຳ ສຳນວນ ທີ່ຈັບງາມ ພໍປະມານ.
- ຂຽນປໂຍກເຫລົ່ານີ້ໃສ່ກະດານໃຫຍ່ ໃຫ້ກະວ່າເດັກນັກຮຽນທຸກຄົນຈະລຽວເຫັນໄດ້ດີ. ແລະຢູ່ໃນກະດານນັ້ນບໍ່ໃຫ້ມີຮອຍຂີດ ຮູບແຕ້ມຫລືຖ້ອຍຄຳອື່ນໃດປະປົນຢູ່. ໃຫ້ມີແຕ່ສະເພາະບົດທີ່ເດັກຈະກ່າຍເອົາເທົ່ານັ້ນ.

**-ຂໍ້ຫ້າມ.** ຢ່າໃຫ້ເດັກກ່າຍບົດຫັດອ່ານທີ່ຍືດຍາວເກີນໄປ ຈະບໍ່ໃຫ້ຄຸນຄ່າໃນດ້ານການຮຽນ ການສອນແຕ່ຢ່າງໃດເລີຍ.

## ໑໓-ເວລາສອນວິທຍາສາດ

ໃຫ້ສອນຈາກການສັງເກດ ຂອງ



ຈິງສເມີ. ຄຣູຖາມເຈາະຈີ້ມໃຫ້ນັກຮຽນໄດ້ຄິດຕຶກຕອງ ພິຈາຣະນາ ຫາເຫດຜົລທີ່ເປັນຈິງ ແລ້ວຈຶ່ງສລຸບເປັນກົດເກນໄວ້. ສົ່ງເສີມໃຫ້ເດັກໄດ້ມີນິດໄສນັກສັງເກດຄົ້ນຄວ້າ ໃຫ້ເຂົາເຈົ້າໄດ້ຮັບຄວາມຮູ້ກວ້າງຂວາງໂດຍຄຣູເປັນຜູ້ຊ່າງຊອກບັນຫາຂຶ້ນມາໃຫ້ເຂົາໄດ້ຄິດ ພິຈາຣະນາເລື້ອຍໆ. ນອກຈາກນີ້ເມື່ອເຂົາເຈົ້າເຂົ້າໃຈບົດຮຽນແລ້ວ ຕ້ອງໃຫ້ເຂົາສາມາດສະແດງອອກດ້ວຍການແຕ້ມຮູບ ອະທິບາຍນຳດ້ວຍ ມັນເປັນການຝຶກຫັດໃຫ້ເດັກໄດ້ມີການພັທນາໄປຫລາຍໆດ້ານ.

## ໑໔-ທັມມະຈາຣິຍາ.

ສອນໄດ້ທັງທາງກົງແລະທາງອ້ອມ ການສອນທາງກົງນັ້ນ ຄຣູສອນເປັນບົດຮຽນ ຕາມຕາຣາງສອນທີ່ມີໄວ້. ສ່ວນທາງອ້ອມນັ້ນ ສອນຕາມໂອກາດ ດ້ວຍເຫດທີ່ເກີດຂຶ້ນ ດ້ວຍບົດອ່ານແລະໃນທຸກໆບົດຮຽນ. ການສອນທັມມະຈາຣິຍານີ້ຄວນຈະເລີ່ມດ້ວຍນິທານປະກອບຫຍໍ້ໆ ເຂົ້າໃຈງ່າຍ. ຕໍ່ມາໃຫ້ປຽບທຽບກັບເຫດການໃນຊີວິດປະຈຳວັນຫລາຍຢ່າງ. ແລ້ວສລຸບເປັນກົດໄວ້ດ້ວຍ: ປໂຍກຄຳເວົ້າທັມມະດາສັ້ນໆ ຫລືຄຳສຸພາສິດກໍໄດ້.

## ໑໕-ບົດທ່ອງຂຶ້ນໃຈ.

ໃຫ້ຊອກຫາບົດທີ່ມີຄຸນຄ່າທາງວັນນະຄະດີທີ່ສຸດ. ການສອນນີ້ເຮົາເຮັດໄດ້ສອງວິທີ ໑/. **ດ້ວຍການຟັງ:** ຄຣູເວົ້າໃຫ້ເດັກຟັງຫລາຍໆຄັ້ງ ໃຫ້ເດັກເວົ້າຕາມ. ເຮັດໄປເທື່ອລະຂັ້ນ ຈົນໝົດບົດຮຽນນັ້ນ. ຣະວັງຕ້ອງຄອຍກວດສຳນຽງສຽງເວົ້າ ການຂຶ້ນສຽງລົງສຽງ ແລະການຢຸດຕາມວັກຕອນສເມີ.

໒/. **-ດ້ວຍການອ່ານຢູ່ກະດານໃຫຍ່.** ຄຣູຂຽນບົດຮຽນໃສ່ກະດານງາມໆ ອ່ານໃຫ້ເດັກຟັງຫລາຍໆຄັ້ງ ໃຫ້ເດັກອ່ານຕາມ ເມື່ອເດັກເຂົ້າໃຈຄວາມໝາຍດີແລ້ວ ຄຣູຕັ້ງຕົ້ນລຶບຂໍ້ຄວາມໄປເທື່ອລະນ້ອຍ ໃຫ້ເດັກອ່ານບ່ອນລຶບອອກນັ້ນໃຫ້ໄດ້. ເຮັດດັ່ງນີ້ຈົນໝົດບົດຮຽນ .

# ການສອນອ່ານ ໃນຊັ້ນປະຖົມ ໑

**໑. ຈຸດປະສົງ.** ຕົກທ້າຍເດືອນ ມີນາ ( ທ້າຍເດືອນ ໗ ຂອງການສຶກສາ ) ນັກຮຽນ ປ.໑ ທຸກຄົນຕ້ອງໄດ້ອ່ານຢ່າງຈັດເຈນ. ການຄ້າງຫ້ອງໃນຊັ້ນນີ້ ຕ້ອງຕ່ຳກວ່າ ໕%.

**໒. ອຸປກອນ.** ໃນການສອນອ່ານນີ້ ຄຣູຈະໄດ້ໃຊ້:

໑. ປຶ້ມອ່ານ ປ.໑ ພາກ ໑ ເສັຽກ່ອນ ແລ້ວຈຶ່ງໃຊ້ປຶ້ມອ່ານ ປ.໑ ພາກ ໒ ທີ່ພິມອອກ ໂດຍ ກະຊວງສຶກສາທິການ.

໒. ອຸປກອນ ຫລືອື່ນໆ ທີ່ຄຣູມີຢູ່.

໓ ປໂຍກ ແລະບົດຄວາມງ່າຍໆ ປະກອບດ້ວຍສັບ ແລະສິ່ງທີ່ນັກຮຽນຮູ້ແລ້ວ

**໓. ຊົ່ວໂມງສອນ.** ໑໐ ຊົ່ວໂມງ ຕໍ່ອາທິດ.

ໃນວັນນຶ່ງໆຂອງການຮຽນ ຈະມີເວລາ ໒ ຊົ່ວໂມງ ສະເພາະການຫັດອ່ານ ໂດຍໃຫ້ມີ:

໒ ເວລາ ລະ ໓໐ ນາທີ

໓ ເວລາ ລະ ໒໐ ນາທີ ໂດຍຈັດໃສ່ດັ່ງນີ້:

**ຕອນເຊົ້າ.** ໗ ມ ໒໐ ຫາ ໗ ມ ໕໐: ( ໓໐ ນາທີ )

໘ ມ ໒໐ ຫາ ໘ ມ ໔໐: ( ໒໐ ນາທີ )

໙ ມ ໔໕ ຫາ ໑໐ ມ ໑໕: ( ໓໐ ນາທີ )

໑໐ ມ ໕໐ ຫາ ໑໑ ມ ໑໐: ( ໒໐ ນາທີ )

**ຕອນບ່າຍ.** ໑໔ ມ ໓໐ ຫາ ໑໕ ມ ໐໐: ( ໓໐ ນາທີ )

**໔. ການເບິ່ງຫລັກສູດ ປະຈຳເດືອນ.** ເພື່ອໃຫ້ເຖິງຈຸດໝາຍທີ່ຄາດໄວ້ ຄືໃຫ້ເດັກອ່ານໄດ້ຈັດເຈນ ໃນທ້າຍເດືອນ ມີນາ, ຄຣູ



ຕ້ອງກະເວລາ ແລະແບ່ງປັນອຽກໃຫ້ເໝາະສົມ.

ໃນການສອນອ່ານນີ້ ການແບ່ງຫລັກສູດ ໄດ້ອີງໃສ່ການແບ່ງປັນ ຂັ້ນໄຕຣມາດ ໂດຍໃຫ້ມີເວລາລົ້ມບົດຮຽນເກົ່າ ຂັ້ນໄວ້ດັ່ງຕໍ່ໄປນີ້:

**ໄຕຣມາດທີ ໑.** ກັນຍາ – ຕຸລາ – ພຶສຈິກາ: ຮຽນປຶ້ມ ປ.໑ ພາກ ໑

ທັນວາ: ລົ້ມບົດຮຽນເກົ່າ ໃນປຶ້ມ ປ ໑ ພາກ ໑.

( ໃນຕົ້ນເດືອນມັກກຣາ ນັກຮຽນຕ້ອງໄດ້ມີຄວາມຮູ້ທີ່ມີໃນປຶ້ມອ່ານ ປ. ໑ ພາກ ໑ ).

**ໄຕຣມາດທີ ໒.** ມັກກຣາ – ກຸມພາ – ມີນາ: ຮຽນປຶ້ມ ປ.໑ ພາກ ໒

ເມສາ: ລົ້ມບົດຮຽນເກົ່າໃນປຶ້ມ ປ.໑ ພາກ ໒. ພຶສພາ ແລະມິຖຸນາ: ຫັດອ່ານໃຫ້ຫລ່ຽນໄຫລ ຈາກບົດຄວາມງ່າຍໆ ທີ່ສອດຄ້ອງກັບສູນສົນໃຈ. ຄຣູອາດຈະແຕ່ງບົດຄວາມເຫລົ່ານັ້ນ ຫລືຄັດເລືອກເອົາຈາກປຶ້ມບົດຮຽນໃນຊັ້ນ ປ.໑ ດັ່ງປຶ້ມ ສຸຂອິທຍາ, ສາສນາ, ປວັດສາດ...

**ການຮຽນໃນປຶ້ມ ປ.໑ ພາກ ໑.** ໃນຣະຍະ ໄຕຣມາດທຳອິດ, ( ກັນຍາ, ຕຸລາ ແລະພຶສຈິກາ ) ຈະມີວັນຮຽນຢູ່ ປະມານ ໖໐ ວັນ ແລະໃນປຶ້ມຮຽນ ພາກ ໑ ນີ້ ມີບົດຮຽນຢູ່ ໒໘ ບົດ. ດັ່ງນີ້ ບົດຮຽນບົດນຶ່ງກໍຈະຕ້ອງ ໃຫ້ຮຽນໄດ້ໃນເວລາ ໒ ວັນ ຫລື ໔ ຊົ່ວໂມງ ດັ່ງໄດ້ແນະນຳໃຫ້ແລ້ວ.

**ການຮຽນໃນປຶ້ມ ປ. ໑ ພາກ ໒.** ໃນຈຳນວນ ໒໔ ບົດຮຽນທຳອິດຂອງປຶ້ມພາກນີ້, ການຮຽນ ບົດຮຽນ ບົດນຶ່ງ ຈະຕ້ອງໃຫ້ເວລາ ໒ ວັນ ດັ່ງດຽວກັບການຮຽນໃນປຶ້ມ ປ.໑ ພາກ ໑. ຕໍ່ຈາກນັ້ນໄປກໍຈະໄດ້ຮຽນ ວັນລະບົດຮຽນ. ດັ່ງນີ້ ການອ່ານໃຫ້ຫລ່ຽນໄຫລ ຈະຕ້ອງໃຫ້ໄດ້ກ່ອນເວລາພັກປີໃໝ່ລາວ.

## ໕. ວິທີສອນອ່ານ. ການສອນອ່ານໃນຊັ້ນ ປ.໑ ຕາມແບບຮຽນ ພາກ ໑ ແລະພາກ ໔ ຕ້ອງໃຫ້ນຳແຜນດັ່ງຕໍ່ໄປນີ້ :

ກ / ວັນທຳອິດຂອງບົດຮຽນ ບົດ ໑

### ເວລາທຳອິດ. ໗ ມ ໔໐ ຫາ ໗ ມ ໕໐.

- ຄຣູກ່າຍບົດຮຽນໃສ່ກະດານ ໂດຍໃຊ້ສໍສີແດງ ຫລືສີຟ້າ ຂຽນພະຍັນຊະນະ ຫລືສຣະ ທີ່ຮຽນໃໝ່. (ຖ້າຈະໃຫ້ດີຕ້ອງໃຊ້ສີຕ່າງກັນ ລະຫວ່າງ ສຣະ ແລະພະຍັນຊະນະທີ່ຮຽນໃໝ່ນັ້ນ). ສ່ວນ ອັກຂຣະ ທີ່ໄດ້ຮຽນມາແລ້ວ ໃຫ້ໃຊ້ສໍຂາວ.

ຖ້າວ່າເປັນບົດຮຽນທຳອິດ ໃນປີການສຶກສາ (ບົດຮຽນທີ ໑ ຂອງ ແບບຮຽນພາກ ໑ ) ຄຣູກໍຄວນໃຊ້ສີ ໍ ຕ່າງລະຫວ່າງສຣະ ແລະພະຍັນ ຊນະ. ການໃຊ້ສີນີ້ຈະພາໃຫ້ນັກຮຽນ ີ່ ແລະຮູ້ວ່າ ອັກຂຣະຕົວໃດເປັນ ຕົວໃໝ່ທັງຈະຊ່ວຍໃຫ້ນັກຮຽນຈົດຈຳໄດ້ດີ

- ຄຣູອ່ານຊ້າໆ ໂດຍເອົາໄມ້ຊີ້ໃສ່ຕົວພະຍັນຊະນະ ແລະສຣະ.
- ຄຣູອ່ານບົດ ຫລື ຄຳ ຫລືຄວາມນັ້ນອີກ. ເທື່ອທີ ໔.
- ຄຣູອ່ານບົດ ຫລືຄວາມນັ້ນ ໂດຍຢຸດເປັນຄຳໆ ເພື່ອໃຫ້ນັກຮຽນໄດ້ອ່ານ ຕາມຫລັງ. (ທັງໝົດນີ້ ໃຫ້ໃຊ້ເວລາປະມານ ໑໐ ນາທີ. )
- ຄຣູໃຫ້ນັກຮຽນ <u>ແຕ່ລະຄົນ</u> ອ່ານຢູ່ກັບບ່ອນນັ່ງ ໂດຍແມ່ນຄຣູເປັນ ຜູ້ຊີ້ຄວາມ ຫລືຄຳນັ້ນ ຢູ່ກະດານດຳ. ການໃຫ້ນັກຮຽນອ່ານນີ້ ຕ້ອງໃຫ້ ຊ້າໆ ເຖິງຈະແມ່ນນັກຮຽນດີກໍຕາມ, ເພື່ອໃຫ້ນັກຮຽນທຸກຄົນສອຍໂອ ກາດ ໃນການອ່ານຂອງໝູ່ ຈຶ່ງກະໃຫ້ນັກຮຽນປະມານ ໔໐ ຄົນ ໄດ້ອ່ານ ໃນຕອນນີ້.

### ເວລາທີ ໒. ໘ ມ ໔໐ ຫາ ໘ ມ ໕໐.

ເປັນເວລາທີ່ໃຫ້ນັກຮຽນອ່ານ ທີລະຄົນ ໂດຍໃຫ້ມີການຫັດອ່ານ ດ້ວຍວິ ທີຫັດອ່ານດັ່ງນີ້ :



- ວິທີ ໑. ຄຣູຊີ້ຄຳນຶ່ງ ຫລືຄວາມນຶ່ງຢູ່ກະດານດຳ. ໃຫ້ນັກຮຽນຜູ້ໃດຍົກມື ຂຶ້ນ ແລ້ວຄຣູ ຈຶ່ງຊີ້ໃຫ້ນັກຮຽນຄົນໃດຄົນນຶ່ງອ່ານ.

ວິທີ ໒. ຄຣູບອກຄຳໃດ ຄຳນຶ່ງ ທີ່ມີຢູ່ໃນບົດອ່ານ. ໃຫ້ນັກຮຽນຊອກ ຫາຄຳນັ້ນ ໃນກະດານດຳ ແລ້ວຄຣູໃຫ້ນັກຮຽນຜູ້ນຶ່ງ ອອກໄປຊີ້ຄຳນັ້ນທີ່ ກະດານດຳ .

### ເວລາທີ ໓. ໙ ມ ໕໐ ຫາ ໑໐ ມ ໑໕.

ໃຫ້ນັກຮຽນຜູ້ອ່ອນກ່ວາໝູ່ ອ່ານເທື່ອລະຄົນ ໂດຍຄວາມແນະນຳຂອງ ຄຣູ ( ຜູ້ເກັ່ງແລ້ວ ກໍຕ້ອງນຳການອ່ານນັ້ນ ຄືກັນກັບໝູ່ ).

### ເວລາທີ ໔. ໑໐ ມ ໕໐ ຫາ ໑໑ ມ ໑໐.

ຄຣູໃຫ້ນັກຮຽນອ່ານ ເທື່ອລະຄົນ (ປະມານ ໑໐ ຄົນ ) ແລ້ວ ຄຣູໃຊ້ວິ ທີ ໓: ຄຣູບອກຄຳໃດຄຳນຶ່ງ ທີ່ມີໃນບົດອ່ານ, ໃຫ້ນັກຮຽນຊອກຫາຄຳ ນັ້ນ ແລ້ວໃຫ້ເຂົາເຈົ້າຂຽນໃສ່ກະດານຫີນຂອງເຂົາເຈົ້າ. ດັ່ງນີ້ ຫລາຍໆ ຄຳ ຈົນໃຫ້ໝົດເວລາ, ຖ້າເຂົາເຈົ້າຂຽນໄດ້ທຸກໆຄຳໃນບົດນັ້ນຍິ່ງດີ.

### ເວລາທີ ໕. ໑໔ ມ ໓໐ ຫາ ໑໕ ມ ໐໐.

ໃນເວລານີ້ ຄຣູໃຫ້ນັກຮຽນອ່ານ ຕາມແບບຮຽນ.

- ອ່ານ – ໃຫ້ນັກຮຽນອ່ານຕາມແບບຮຽນໂດຍ ນຳດ້ວຍສໍດຳ ຫລືນິ້ວມື ( ຄວນໃຊ້ເວລາ ປະມານ ໑໐ ນາທີ ).
- ຂຽນຕາມບອກ – ໃຫ້ນັກຮຽນອັດແບບຮຽນໄວ້, ເອົາກະດານຫີນອອກ ໃຊ້. ຄຣູບອກຄຳໃດຄຳນຶ່ງ ໃຫ້ນັກຮຽນ ຂຽນ – ຄຣູສຳຣວດເບິ່ງ ໂດຍ ໃຫ້ເຂົາເຈົ້າ ຍົກກະດານຫີນນັ້ນຂຶ້ນ. (ຄວນໃຊ້ເວລາອີກ ໑໐ ນາທີ)
- ອ່ານ – ໃຫ້ນັກຮຽນອ່ານຕາມແບບຮຽນອີກ ໃນ ໑໐ ນາທີສຸດທ້າຍ.

ຂ./ ວັນທີ ໒ ຂອງບົດຮຽນ ບົດນຶ່ງ-

## - ເວລາ ທຳອິດ.

ຄຣູຂຽນບົດອ່ານໃສ່ກະດານດຳ. ບົດອ່ານນີ້ ຕ້ອງໃຫ້ເປັນບົດຕ່າງໆຈາກບົດຮຽນທີ່ມີຢູ່ໃນແບບຮຽນອື່ນໆ ໃນຊັ້ນນີ້ກໍໄດ້ ແຕ່ໃຫ້ມີຕົວພະຍັນຊະນະ ແລະສຣະຕົວດຽວກັບບົດ ທີ່ມີໃນແບບຮຽນ ໂດຍບໍ່ໃຫ້ມີໃໝ່ ນອກເໜືອໄປອີກ ຫາກວ່າຈຳເປັນທີ່ສຸດ ຄຣູຈະປ່ຽນແຕ່ອັນດັບຄຳເວົ້າ ໂດຍໃຊ້ຄຳ ແລະສັບດຽວກັນກັບ ບົດທີ່ມີໃນແບບຮຽນນັ້ນກໍໄດ້. ( ທັງນີ້ເພື່ອເວັ້ນຈາກການທ່ອງເອົາບົດອ່ານ ແທນທີ່ຈະແມ່ນການອ່ານແທ້ໆຂອງນັກຮຽນ )

## - ເວລາ ທີ ໒.

ໃຫ້ນັກຮຽນອ່ານໃນແບບຮຽນ ໂດຍໃຊ້ບົດອ່ານບົດດຽວກັນກັບນີ້ອານນີ້.

## - ເວລາ ທີ ໓.

ໃຫ້ນັກຮຽນພວກຂ່ອນອ່ານ ບົດທີ່ຄຣູຂຽນໃສ່ກະດານດຳໂດຍຄວາມແນະນຳຂອງຄຣູ ( ຈຶ່ງໃຊ້ວິທີອ່ານ ທີ່ໄດ້ອະທິບາຍມາແລ້ວ ).

## - ເວລາ ທີ ໔.

ໃຫ້ນັກຮຽນອ່ານໃນແບບຮຽນ ໂດຍຄຣູໃຊ້ວິທີອ່ານຕ່າງໆ.

## - ເວລາ ທີ ໕.

ໃຫ້ປະຕິບັດດັ່ງດຽວກັບນີ້ ທີ່ຜ່ານມາ ໃນເວລາດຽວກັນນີ້ ຄື :

- ອ່ານ ຕາມແບບຮຽນ.
- ຂຽນ ຕາມບອກ ແລະອ່ານຕາມແບບຮຽນ.

**ຂໍ້ສັງເກດ.** ຢູ່ໃນຊັ້ນປະຖົມ ໑ ມັກຈະມີນັກຮຽນຄ້າງຊັ້ນເປັນຈຳນວນມາກມາຍ ເມື່ອເປັນເຊັ່ນນັ້ນ ຄຣູມັກຈະແບ່ງ ຈຸນັກຮຽນອອກເປັນສອງຈຸ ອັນເປັນວິທີບໍ່ເໝາະສົມ.



ດັ່ງນັ້ນ, ການແບ່ງເວລາ ແລະວິທີສອນ ທີ່ໄດ້ກ່າວມານີ້ ຈຶ່ງເປັນວິທີສະເພາະນັກຮຽນ ປ. ໑ ໝົດຊັ້ນ. ຈະເປັນພວກເຂົ້າໃໝ່ ຫລືຄ້າງຊັ້ນກໍຕາມ. ການຄືບໜ້າຂອງເດັກຈະຕ້ອງພາໃຫ້ເຂົາເຈົ້າ ໄດ້ຂຶ້ນຊັ້ນ ປ.໒ ເກືອບທຸກຄົນ.

## ສິ່ງທີ່ຄວນເວັ້ນ ເທົ່າທີ່ຈະເວັ້ນໄດ້.

- ເອົານັກຮຽນໝູ່ນຶ່ງ ໄປອ່ານຢູ່ກະດານດຳ
- ໃຫ້ນັກຮຽນອ່ານພ້ອມກັນ.
- ປະໃຫ້ນັກຮຽນອ່ານເອງຢູ່ກະດານດຳ ເພາະຖ້າເປັນນັກຮຽນດີຫລືຜູ້ຄ້າງຫ້ອງ ເຂົາເຈົ້າກໍອາດຈະອ່ານໄອໂພດ. ຄຣູຄອນກຳກັບການອ່ານຂອງເດັກຕລອດເວລາ.
- ປະໃຫ້ນັກຮຽນອ່ານ ດ້ວຍສຳນຽງເທດ ຫລືລຳ.
- ຖ້າຄົນນຶ່ງອ່ານບໍ່ໄດ້ແລ້ວ ກໍປະໃຫ້ຄົນອື່ນອ່ານຕໍ່ໄປ ໂດຍບໍ່ໃຫ້ຜູ້ບໍ່ໄດ້ນັ້ນອ່ານຊ້ຳ, ຫລືໃຫ້ເວົ້າຕາມໝູ່ ໂດຍບໍ່ແນມເບິ່ງຄຳທີ່ຂຽນ.

ພິມທີ່ ໂຮງພິມ ຂົວຫລວງ ການພິມ ໂທຣ. 2307 ວຽງຈັນທນ໌ ລາວ